Implemented by



Photo credit: © GIZ Laos / CliPAD

# ການປະກາດຮັບບົດສະເໜີໂຄງການ ທຶນສົມທົບ ປະຈຳປີ 2026

## ເອກະສານຊ້ອນທ້າຍ ສຳລັບການປະກາດຮັບບົດສະເໜີໂຄງການ: ພາບລວມຂອງເງື່ອນໄຂຄຸນສົມບັດຂອງ MGFA ແລະ ຂັ້ນຕອນການຍື່ນສະໝັກ ແລະ ການຄັດເລືອກ

# ສາລະບານ


01 ບົດນຳ

02 ໂຄງການ SU-I-GFLM

03 ກອງທຶນສົ່ງເສີມ ທຸລະກິດກະສິກຳ

04 ການປະກາດຮັບບົດສະເໜີ

05 ມາດຖານເງື່ອນໄຂການ ສະໝັກ

06 ການສະໜັບສະໜູນໃບ ຄຳຮ້ອງສະໝັກ

07 ຂັ້ນຕອນການ ຄັດເລືອກ

08 ໄລຍະເວລາຄາດຄະແນ ຂອງ ການເປີດຮັບບົດ ສະເໜີໂຄງການ

09 ເງື່ອນໄຂ ແລະ ຂໍ້ກຳນົດ ຂອບເຂດຄວາມ ຮັບຜິດຊອບ

10 ຖະແຫຼງການກ່ຽວກັບ ຄວາມເປັນສ່ວນຕົວ ຂອງຂໍ້ມູນ

11 ເອກະສານຊ້ອນທ້າຍ

# ບົດນຳ

ເອກະສານການໃຫ້ຂໍ້ມູນ ແລະ ຄຳອະທິບາຍກ່ຽວກັບເງື່ອນໄຂການມີສິດໄດ້ຮັບທຶນ, ວິທີການສະໝັກ ແລະ ຂະບວນການຄັດເລືອກ ຂອງ ກອງທຶນ ທຶນສົມທົບ ນີ້ແມ່ນເປັນເອກະສານຄັດຕິດທີ່ 1 ຂອງເອກະສານເປີດຮັບສະໝັກບົດສະເໜີໂຄງການທຶນສົມທົບ, ສະບັບເລກທີ 3077/ກປມ, ລົງວັນທີ 25 ພຶດສະພາ 2026 ອອກໂດຍກົມປ່າໄມ້, ກະຊວງກະສິກຳ ແລະ ສິ່ງແວດລ້ອມ, ສາທາລະນະລັດປະຊາທິປະໄຕປະຊາຊົນລາວ.

ຈຸດປະສົງ ຂອງ ກອງທຶນ ທຶນສົມທົບ ແມ່ນເພື່ອແນໃສ່ບັນດາຫົວໜ່ວຍທຸລະກິດທີ່ເຄື່ອນໄຫວໃນຂະແໜງກະສິກຳ (ທຸລະກິດກະສິກຳ), ຜູ້ທີ່ມີຄວາມສົນໃຈຫຼາຍໃນການລົງທຶນເຂົ້າ ຕ່ອງໂສ້ມູນຄ່າກະສິກຳ (agricultural value chains - AVCs) ແບບປາສະຈາກການທຳລາຍປ່າໄມ້ ແລະ ແບບຍືນຍົງ ໃນ 6 ແຂວງ ຂອງ ສປປ ລາວ ເຊິ່ງປະກອບມີ: ແຂວງໄຊຍະບູລີ, ຫຼວງພະບາງ, ຫົວພັນ, ອຸດົມໄຊ, ຫຼວງນໍ້າທາ ແລະ ບໍ່ແກ້ວ. ທຸລະກິດກະສິກຳ ທີ່ມີເງື່ອນໄຂຄົບຖ້ວນຕາມມາດຖານຂອງທຶນສົມທົບ (Matching-grant funding - MGF) ແມ່ນສາມາດຮັບທຶນຊ່ວຍເຫຼືອໄດ້ສູງສຸດເຖິງ 50% ຂອງມູນຄ່າການລົງທຶນທີ່ສະເໜີມາ, ໂດຍມີມູນຄ່າທຶນຊ່ວຍເຫຼືອສູງສຸດບໍ່ເກີນ 50,000 ເອີໂຣ. ນອກຈາກນັ້ນ, ບັນດາທຸລະກິດກະສິກຳທີ່ຖືກຄັດເລືອກ ຍັງຈະໄດ້ຮັບການຊ່ວຍເຫຼືອທາງດ້ານເຕັກນິກຕາມຄວາມຕ້ອງການໂດຍບໍ່ເສຍຄ່າ. ເອກະສານສະບັບນີ້ ຈະໃຫ້ຂໍ້ມູນກ່ຽວກັບຈຸດປະສົງຂອງໂຄງການ SU-I-GFLM, ການປະກາດຮັບບົດສະເໜີ ແລະ ໂຄງສ້າງການຄຸ້ມຄອງທີ່ກ່ຽວຂ້ອງ, ຂັ້ນຕອນການສະໝັກ ແລະ ມາດຖານການຄັດເລືອກ.

**→ 6 ແຂວງ**

ໄຊຍະບູລີ, ຫຼວງພະບາງ, ຫົວພັນ, ອຸດົມໄຊ, ຫຼວງນໍ້າທາ, ບໍ່ແກ້ວ

**→ ສະໜັບສະໜູນແບບສົມທົບ 50%**

ທຶນຊ່ວຍເຫຼືອຈະກວມເອົາສູງສຸດ 50% ຂອງມູນຄ່າການລົງທຶນ.

**→ ສູງສຸດ 50,000 ເອີໂຣ**

ວົງເງິນທຶນສົມທົບສູງສຸດຕໍ່ໜຶ່ງທຸລະກິດກະສິກຳ



# ໂຄງການ SU-I-GFLM

ລັດຖະບານ ແຫ່ງ ສປປ ລາວ ຕາງໜ້າໂດຍ ກະຊວງກະສິກຳ ແລະ ສິ່ງແວດລ້ອມ (MAE), ໂດຍການຮ່ວມມືກັບ GIZ, ກຳລັງຈັດຕັ້ງປະຕິບັດໂຄງການ SU-I-GFLM ໂດຍໄດ້ຮັບທຶນສະໜັບສະໜູນຈາກ ກອງທຶນສີຂຽວເພື່ອການປ່ຽນແປງດິນຟ້າອາກາດ (GCF) ແລະ ກະຊວງຮ່ວມມືດ້ານເສດຖະກິດ ແລະ ການພັດທະນາ ແຫ່ງ ສະຫະພັນ ສາທາລະນະລັດ ເຢຍລະມັນ (BMZ)

## → ຈຸດປະສົງຂອງໂຄງການ

ຈຸດປະສົງຫຼັກຂອງໂຄງການ ແມ່ນເພື່ອສະໜັບສະໜູນລັດຖະບານ ໃນການບັນລຸເປົ້າໝາຍການຫຼຸດຜ່ອນການເຊື່ອມໂຊມຂອງປ່າໄມ້, ການທຳລາຍປ່າໄມ້ ແລະ ການປ່ອຍອາຍພິດເຮືອນແກ້ວ (GHG).

## → ຂອບເຂດພື້ນທີ່

ໂຄງການແມ່ນຈັດຕັ້ງປະຕິບັດຢູ່ໃນ 27 ເມືອງ ຂອງແຂວງໄຊຍະບູລີ, ຫຼວງພະບາງ, ຫົວພັນ, ອຸດົມໄຊ, ຫຼວງນ້ຳທາ ແລະ ບໍ່ແກ້ວ

## → ການຄຸ້ມຄອງໂຄງການ

ໜ່ວຍງານຄຸ້ມຄອງໂຄງການຂັ້ນສູນກາງ (NPMU) ຂອງໂຄງການ SU-I-GFLM ແມ່ນໄດ້ຮັບການສ້າງຕັ້ງຂຶ້ນຢູ່ ກົມປ່າໄມ້ (MAE) ແລະ ໄດ້ຮັບການຊ່ວຍເຫຼືອທາງດ້ານເຕັກນິກຈາກ GIZ.

## → ພາກສ່ວນເອກະຊົນ ແລະ ການສະໜັບສະໜູນຂອງໂຄງການ

ໂຄງການຖືວ່າພາກສ່ວນເອກະຊົນມີບົດບາດສຳຄັນໃນການບັນລຸຈຸດປະສົງຂອງໂຄງການ. ໂຄງການໃຫ້ການສະໜັບສະໜູນແກ່ທຸລະກິດກະສິກຳ ເພື່ອຊຸກຍູ້ການລົງທຶນເຂົ້າໃນການຜະລິດກະສິກຳທີ່ປາສະຈາກການທຳລາຍປ່າໄມ້ ແລະ ແບບຍືນຍົງ ເພື່ອປະກອບສ່ວນເຂົ້າໃນການຫຼຸດຜ່ອນການເຊື່ອມໂຊມຂອງປ່າໄມ້, ການທຳລາຍປ່າໄມ້ ແລະ ການປ່ອຍອາຍພິດເຮືອນແກ້ວ (GHG).

## → ຂອບເຂດ ແລະ ຄາດໝາຍຜົນໄດ້ຮັບ

ໂຄງການແນໃສ່ບັນດາທຸລະກິດກະສິກຳ ທີ່ມີຄວາມພ້ອມໃນການລົງທຶນເຂົ້າໃນການຜະລິດກະສິກຳທີ່ປາສະຈາກການທຳລາຍປ່າໄມ້ ແລະ ແບບຍືນຍົງ ທີ່ປະກົດຢູ່ໃນລາຍການທີ່ໄດ້ຮັບອະນຸຍາດ (Whitelist) ຂອງໂຄງການ. ການລົງທຶນຄວນສົ່ງຜົນກະທົບທາງບວກຕໍ່ຕ່ອງໂສ້ມູນຄ່າທີ່ຕິດພັນກັບ ລາຍຊື່ທີ່ໄດ້ຮັບອະນຸຍາດ, ເພື່ອປະກອບສ່ວນເຂົ້າໃນການສ້າງສາຍພົວພັນທາງການຄ້າທີ່ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດກັບຊາວກະສິກອນ, ການປະຕິບັດທີ່ຍືນຍົງກວ່າເກົ່າ, ການກະສິກຳທີ່ປັບຕົວກັບສະພາບພູມອາກາດ (Climate-smart) ແລະ ປາສະຈາກການທຳລາຍປ່າໄມ້ ຫຼື ປະກອບສ່ວນເຂົ້າໃນການຫຼຸດຜ່ອນການເຊື່ອມໂຊມຂອງປ່າໄມ້, ການທຳລາຍປ່າໄມ້ ຫຼື ການປ່ອຍອາຍພິດເຮືອນແກ້ວ. ຖ້າຫາກ ຜູ້ປະກອບການທີ່ສົນໃຈສະມັກ ບໍ່ສາມາດຍົກໃຫ້ເຫັນເຖິງ ການປະກອບສ່ວນເຂົ້າໃນຈຸດປະສົງຂອງໂຄງການ ແລະ ການເຊື່ອມໂຍງກັບຄວາມຍືນຍົງຢ່າງພຽງພໍ, ການລົງທຶນນັ້ນຈະບໍ່ໄດ້ຮັບການສະໜັບສະໜູນ.

## → ທຶນສົມທົບ (MGFA): ມູນຄ່າທຶນ ແລະ ສ່ວນຮ່ວມສົມທົບ

ວົງເງິນທຶນສົມທົບ ທີ່ມີໃຫ້ສຳລັບແຕ່ລະທຸລະກິດກະສິກຳ ແມ່ນຢູ່ລະຫວ່າງ 5,000 ເອີໂຣ ເຖິງ 50,000 ເອີໂຣ. ສ່ວນແບ່ງທຶນທີ່ເຫຼືອສຳລັບການລົງທຶນ ແມ່ນຕ້ອງມາຈາກວິສາຫະກິດເອງ ເຊິ່ງມີມູນຄ່າເທົ່າກັບ 50% ຫຼື ຫຼາຍກວ່ານັ້ນ ຂອງມູນຄ່າການລົງທຶນທັງໝົດ. ດັ່ງນັ້ນ, ທຸລະກິດກະສິກຳຄວນມີຄວາມສາມາດທາງດ້ານການເງິນ ແລະ ມີສະພາບຄ່ອງທີ່ພຽງພໍເພື່ອສາມາດປະກອບສ່ວນທຶນໃນສ່ວນນີ້ໄດ້.

---

[1] https://www.greenclimate.fund/project/fp200#documents

[2] A complete overview of project districts can be found in Appendix 1.

# ກອງທຶນ ທຶນສົມທົບ

ການຄຸ້ມຄອງ ແລະ ການຕິດຕາມກວດກາ ກອງທຶນ ທຶນສົມທົບ (Matching Grant Facility for Agribusiness - MGFA) ທີ່ໄດ້ຮັບການສ້າງຕັ້ງຂຶ້ນນັ້ນ ຈະແມ່ນຄວາມຮັບຜິດຊອບຮ່ວມກັນລະຫວ່າງ ກົມປ່າໄມ້ (DoF), ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ (EFF) ແລະ ອົງການ GIZ. ໜ້າທີ່ໃນການຄຸ້ມຄອງ ແລະ ຕິດຕາມກວດກາ ປະກອບມີ ຄວາມຮັບຜິດຊອບຕໍ່ຂັ້ນຕອນ ແລະ ມາດຖານການຄັດເລືອກຂອງ MGFA, ລວມທັງການອະນຸມັດໃບສະໝັກຂໍທຶນສົມທົບ ຂອງແຕ່ລະຫົວໜ່ວຍ.

## → ຄວາມໂປ່ງໃສ ແລະ ອີງໃສ່ຂໍ້ມູນຄວາມຈິງ

ຄະນະຄຸ້ມຄອງ MGFA ໄດ້ກຳນົດມາດຖານການຄັດເລືອກ, ຂັ້ນຕອນການສະໝັກ ແລະ ການອະນຸມັດ ທີ່ມີຄວາມໂປ່ງໃສ ແລະ ອີງໃສ່ຂໍ້ມູນຄວາມຈິງ ເຊິ່ງໄດ້ຖືກລະບຸໄວ້ໃນ ເອກະສານປະກາດຮັບບົດສະເໜີ ຈະຖືກເຜີຍແຜ່ລົງທາງອອນລາຍ.



# ການປະກາດຮັບບົດສະເໜີ

ເປົ້າໝາຍຂອງການເປີດຮັບສະໝັກ ບົດສະເໜີໂຄງການທຶນສົມທົບ ແມ່ນບັນດາທຸລະກິດກະສິກຳ ທີ່ມີແຜນການລົງທຶນທີ່ຊັດເຈນ ໃນຕ່ອງໂສ້ມູນຄ່າກະສິກຳ ປາສະຈາກການທຳລາຍປ່າໄມ້ ແລະ ແບບຍືນຍົງ ພາຍໃນແຂວງໄຊຍະບູລີ, ຫຼວງພະບາງ, ຫົວພັນ, ອຸດົມໄຊ, ຫຼວງນ້ຳທາ ຫຼື ບໍ່ແກ້ວ ສຳລັບປີ 2026. ຄະນະຄຸ້ມຄອງ MGFA ສະເໜີໃຫ້ບັນດາທຸລະກິດເຫຼົ່ານັ້ນ ກວດຄືນ ແລະ ປະຕິບັດຕາມມາດຖານເງື່ອນໄຂການສະໝັກ ທີ່ລະບຸໄວ້ດ້ານລຸ່ມ ກ່ອນທີ່ຈະຍື່ນຂໍທຶນສົມທົບ ແລະ ການຊ່ວຍເຫຼືອທາງດ້ານເຕັກນິກ. ສຳລັບການປະກາດຮັບບົດສະເໜີ ໃນຄັ້ງນີ້, ງົບປະມານທຶນຊ່ວຍເຫຼືອລ້າທັງໝົດທີ່ມີແມ່ນ 1.8 ລ້ານເອີໂຣ, ໂດຍສາມາດໃຫ້ທຶນສູງສຸດບໍ່ເກີນ 50,000 ເອີໂຣ ຕໍ່ຜູ້ສະໝັກໜຶ່ງລາຍ. ຄະນະຄຸ້ມຄອງ MGFA ສະຫງວນສິດທີ່ຈະບໍ່ອະນຸມັດທຶນທັງໝົດທີ່ມີ ໃນກໍລະນີທີ່ການລົງທຶນນັ້ນ ບໍ່ສອດຄ່ອງກັບມາດຖານການຄັດເລືອກ ຫຼື ບໍ່ປະກອບສ່ວນເຂົ້າໃນຈຸດປະສົງຂອງໂຄງການ. ແບບຟອມການສະໝັກ, ຄູ່ມືແນະນຳສຳລັບຜູ້ສະໝັກ ແລະ ຂໍ້ມູນຕິດຕໍ່ຂອງຄະນະຄຸ້ມຄອງ MGFA ແມ່ນມີໃຫ້ຢູ່ດ້ານລຸ່ມ. ທຸລະກິດກະສິກຳ ແມ່ນສາມາດຕິດຕໍ່ຫາ MGFA ເພື່ອຂໍຄຳອະທິບາຍ ຫຼື ຂໍຄວາມຊ່ວຍເຫຼືອ ຜ່ານຂໍ້ມູນຕິດຕໍ່ທີ່ໃຫ້ໄວ້.

ມາດຖານເງື່ອນໄຂການສະໝັກ ແມ່ນໄດ້ສະຫຼຸບໄວ້ໃນພາກທີ 5 ດ້ານລຸ່ມ ເຊິ່ງທຸລະກິດກະສິກຳສາມາດນຳໃຊ້ເພື່ອກວດຄືນ ວ່າ ເຂົາເຈົ້າ ປະຕິບັດໄດ້ຖືກຕ້ອງຕາມເງື່ອນໄຂ ແລະ ມີສິດໄດ້ຮັບການຊ່ວຍເຫຼືອຈາກ MGFA. ທຸລະກິດກະສິກຳ ໄດ້ຮັບການຊຸກຍູ້ໃຫ້ຍື່ນໃບສະໝັກ ໂດຍນຳໃຊ້ ຄູ່ມືແນະນຳສຳລັບຜູ້ສະໝັກ ແລະ ແບບຟອມການສະໝັກ ແລະ ແບບຟອມບົດສະເໜີການລົງທຶນ ແລະ ແບບຟອມງົບປະມານ ແລະ ໄລຍະເວລາຂອງການລົງທຶນ ເຊິ່ງທ່ານສາມາດສອບຖາມລາຍລະອຽດໄດ້ຕາມທີ່ຢູ່ ແລະ ເບີໂທໃນພາກທີ 6. ໃນກໍລະນີທີ່ມີຄຳຖາມ, ຄຳຄິດຄຳເຫັນ ຫຼື ຂໍ້ຂ້ອງໃຈ ກ່ຽວກັບແບບຟອມການສະໝັກ ແລະ ບົດສະເໜີ, ກອງປະຊຸມສຳມະນາຂັ້ນແຂວງ ຫຼື ການປະກາດຮັບບົດສະເໜີໂດຍລວມ, ກະລຸນາຕິດຕໍ່ຕາມຂໍ້ມູນທີ່ລະບຸໄວ້ໃນພາກທີ 6. ສຸດທ້າຍນີ້, ພາກທີ 7 ຈະໃຫ້ຂໍ້ມູນສະຫຼຸບໂດຍຫຍໍ້ ກ່ຽວກັບຂັ້ນຕອນການຄັດເລືອກຂອງ MGFA ແລະ ພາກທີ 8 ແມ່ນຕາຕະລາງໂດຍປະມານ. ເອກະສານສະບັບນີ້ ຈົບລົງດ້ວຍພາບລວມຂອງເງື່ອນໄຂທົ່ວໄປ, ຂໍ້ກຳນົດຂອບເຂດຄວາມຮັບຜິດຊອບ ໃນ ພາກທີ 9. ແລະ ພາກທີ 10 ຖະແຫຼງການກ່ຽວກັບການຄຸ້ມຄອງຂໍ້ມູນ.



→ **1.8 ລ້ານ ເອີໂຣ**

ວົງເງິນທຶນທີ່ມີໃຫ້ທັງໝົດສຳລັບການປະກາດຮັບຂໍ້ສະເໜີຄັ້ງນີ້

→ **50,000 ເອີໂຣ**

ວົງເງິນທຶນສູງສຸດຕໍ່ຜູ້ສະໝັກໜຶ່ງລາຍ

→ **10 ພາກສ່ວນ**

ເອກະສານສະບັບເຕັມຄອບຄຸມເງື່ອນໄຂການມີສິດເຂົ້າຮ່ວມ, ຂັ້ນຕອນການສະໝັກ, ການຄັດເລືອກ ແລະ ກຳນົດເວລາ

# ມາດຖານເງື່ອນໄຂການສະໝັກ



ກອງທຶນ ທຶນສົມທົບ ຈະນຳໃຊ້ມາດຖານ 3 ຊຸດ ເພື່ອກຳນົດເງື່ອນໄຂຜູ້ມີສິດຮັບການສະໜັບສະໜູນຈາກໂຄງການ, ເຊິ່ງກ່ຽວຂ້ອງກັບແຕ່ລະພາກສ່ວນ ດັ່ງນີ້:

- ຜູ້ສະໝັກ (5.1);
- ການຜະລິດກະສິກຳ: ລາຍການທີ່ໄດ້ຮັບອະນຸຍາດ (5.2);
- ການລົງທຶນ (5.3); ແລະ
- ລາຍຈ່າຍ (5.4).

## 5.1 ເງື່ອນໄຂຂອງຜູ້ສະໝັກ

ທຸລະກິດກະສິກຳ ແມ່ນມີສິດສະໝັກໄດ້ ຫາກມີການປະຕິບັດທີ່ສອດຄ່ອງກັບລະບຽບກົດໝາຍ, ເປັນຂອງເອກະຊົນ ແລະ ມີການຄຸ້ມຄອງບໍລິຫານແບບເປັນເອກະລາດ. ວິສາຫະກິດຈຸລະພາກ, ຂະໜາດນ້ອຍ ແລະ ກາງ ແມ່ນມີສິດສະໝັກໄດ້ ຫາກການດຳເນີນງານຂອງພວກເຂົາ ຕິດພັນກັບບັນດາເປົ້າໝາຍຂອງໂຄງການ. ຜູ້ສະໝັກຄວນມີຂີດຄວາມສາມາດໃນການຄຸ້ມຄອງການເງິນທີ່ພຽງພໍ ຫຼື ຢ່າງໜ້ອຍກໍມີລະບົບການບັນທຶກຂໍ້ມູນ ທີ່ສາມາດນຳມາໃຊ້ໃນການປະເມີນສະພາບການເງິນຂອງທຸລະກິດກະສິກຳໄດ້. ພາບລວມຂອງມາດຖານເງື່ອນໄຂທັງໝົດ ແມ່ນໄດ້ລະບຸໄວ້ໃນ ຕາຕະລາງ 1:

ຕາຕະລາງ *1:* ມາດຖານ ສຳລັບທຸລະກິດກະສິກຳ

| ລ/ດ | ຫົວຂໍ້ | ລາຍລະອຽດ |
|---|---|---|
| 1 | ຮູບແບບ ວິສາຫະກິດ | ເປັນວິສາຫະກິດສ່ວນບຸກຄົນ, ຫຸ້ນສ່ວນ ຫຼື ບໍລິສັດຈຳກັດ ທີ່ສ້າງຕັ້ງຂຶ້ນຖືກຕ້ອງຕາມກົດໝາຍລາວ. |
| 2 | ກຳມະສິດ | ເປັນທຸລະກິດຂອງເອກະຊົນ 100% (ບໍ່ແມ່ນຂອງລັດ). |
| 3 | ການບໍລິຫານ | ມີການຄຸ້ມຄອງ ແລະ ບໍລິຫານວຽກງານເປັນເອກະລາດ. |
| 4 | ຄວາມໜ້າເຊື່ອຖື | ເຈົ້າຂອງທຸລະກິດ, ຄະນະບໍລິຫານ ແລະ ພະນັກງານທຸກຄົນ ຕ້ອງປະຕິບັດຕາມນະໂຍບາຍຂອງ GCF ວ່າດ້ວຍການຫ້າມເຮັດສິ່ງທີ່ບໍ່ຖືກຕ້ອງຢ່າງເຄັ່ງຄັດ. ໂຄງການຈະ 'ບໍ່ມີການຍົກເວັ້ນໃຫ້ເດັດຂາດ' (Zero-tolerance) ຕໍ່ກັບການເຫັນດີນຳ, ການສົ່ງເສີມ ຫຼື ການມີສ່ວນຮ່ວມ ທັງທາງກົງ ແລະ ທາງອ້ອມ ໃນພຶດຕິກຳດັ່ງຕໍ່ໄປນີ້:<br>1. ການສໍ້ລາດບັງຫຼວງ;<br>2. ການຫຼອກລວງ;<br>3. ການຂົ່ມຂູ່ໃຫ້ຄົນອື່ນເຮັດຕາມທີ່ຕົນຕ້ອງການ;<br>4. ການສົມຮູ້ຮ່ວມຄິດແບບບໍ່ໂປ່ງໃສ ເພື່ອເອົາປຽບຜູ້ອື່ນ;<br>5. ການຂັດຂວາງເຮັດໃຫ້ການກວດສອບຂອງໂຄງການຫຍຸ້ງຍາກ;<br>6. ການໃຊ້ອຳນາດ ຫຼື ຕຳແໜ່ງໃນທາງທີ່ຜິດ;<br>7. ການຟອກເງິນ;<br>8. ການປອງຮ້າຍ ຜູ້ທີ່ລາຍງານຄວາມຜິດ ຫຼື ພະຍານ;<br>9. ການສະໜອງທຶນໃຫ້ການກໍ່ການຮ້າຍ;<br>10. ການລ່ວງລະເມີດ<br>11. ການຈຳແນກ ບໍ່ວ່າຈະເປັນເລື່ອງເພດສະພາບ, ຊົນເຜົ່າ ຫຼື ມາດຖານອື່ນໆ<br><br>ເຈົ້າຂອງທຸລະກິດກະສິກຳ ແລະ ຜູ້ບໍລິຫານ ຕ້ອງມີມາດຕະການທີ່ຈຳເປັນເພື່ອປ້ອງກັນ ແລະສະກັດກັ້ນ ບໍ່ໃຫ້ມີພຶດຕິກຳເຫຼົ່ານີ້ເກີດຂຶ້ນໃນວິສາຫະກິດຂອງຕົນ. |

# ມາດຖານເງື່ອນໄຂການສະໝັກ

| ລ/ດ | ຫົວຂໍ້ | ລາຍລະອຽດ |
|---|---|---|
| 5 | ຂໍ້ກຳນົດດ້ານກົດໝາຍ | ວິສາຫະກິດກະສິກຳ ຂະໜາດນ້ອຍ ແລະ ກາງ (Agri-MSMEs) ແລະ ເຈົ້າຂອງທຸລະກິດ ຕ້ອງປະຕິບັດຕາມກົດໝາຍຢ່າງຄົບຖ້ວນ ແລະ ມີເອກະສານຢັ້ງຢືນຊັດເຈນ, ເຊິ່ງລວມມີການປະຕິບັດຕາມຂໍ້ກຳນົດຂອງຂະແໜງການທີ່ກ່ຽວຂ້ອງ ດັ່ງນີ້:<br>1. ຕ້ອງຈົດທະບຽນຖືກຕ້ອງນຳ ກະຊວງອຸດສາຫະກຳ ແລະ ການຄ້າ (MoIC).<br>2. ຕ້ອງມີໃບອະນຸຍາດທີ່ຖືກຕ້ອງຈາກ MAE ເພື່ອດຳເນີນກິດຈະກຳຕ່າງໆທີ່ກ່ຽວຂ້ອງ.<br>3. ຕ້ອງຂຶ້ນທະບຽນເປັນຜູ້ເສຍອາກອນ ແລະ ມອບພັນທະອາກອນໃຫ້ລັດຢ່າງຖືກຕ້ອງຕາມກົດໝາຍ.<br>4. ຕ້ອງມີ ແລະ ນຳໃຊ້ຕາປະທັບທີ່ໄດ້ຮັບອະນຸມັດຢ່າງຖືກຕ້ອງຕາມລະບຽບການ.<br>5. ດຳເນີນກິດຈະການໃຫ້ສອດຄ່ອງກັບ ກົດໝາຍວ່າດ້ວຍແຮງງານ (ການຈ້າງງານ ແລະ ສະຫວັດດີການ).<br>6. ດຳເນີນກິດຈະການໃຫ້ສອດຄ່ອງກັບ ກົດໝາຍວ່າດ້ວຍການປະກັນສັງຄົມ.<br>7. ດຳເນີນກິດຈະການໃຫ້ສອດຄ່ອງກັບ ກົດໝາຍວ່າດ້ວຍການບັນຊີ. |
| 6 | ອາຍຸ | ສ້າງຕັ້ງ ແລະ ດຳເນີນກິດຈະການຕົວຈິງມາແລ້ວຢ່າງໜ້ອຍ 2 ປີ. |
| 7 | ປະເພດກິດຈະກຳ | ຕ້ອງດຳເນີນ ທຸລະກິດໃນຕ່ອງໂສ້ມູນຄ່າກະສິກຳ ທີ່ກຳນົດໄວ້ໃນບັນຊີລາຍຊື່ທີ່ໄດ້ຮັບອະນຸຍາດ, ໂດຍເນັ້ນການສົ່ງເສີມການຜະລິດແບບຍືນຍົງ ແລະ ບໍ່ທຳລາຍປ່າໄມ້. |
| 8 | ສະຖານທີ່ | ທຸລະກິດກະສິກຳ ຕ້ອງມີການດຳເນີນກິດຈະກຳຕົວຈິງ ຢູ່ໃນຢ່າງໜ້ອຍໜຶ່ງເມືອງເປົ້າໝາຍຂອງໂຄງການ. |
| 9 | ການຄຸ້ມຄອງການເງິນ | ວິສາຫະກິດ ຕ້ອງປະຕິບັດດັ່ງນີ້:<br>1. ສະແດງເອກະສານລາຍງານການເງິນ: ເຊິ່ງລວມມີ ໃບລາຍງານລາຍຮັບ-ລາຍຈ່າຍ ແລະ ທຶນໝູນວຽນຂອງປີຫຼ້າສຸດ, ພ້ອມທັງບົດສະຫຼຸບຊັບສິນ ແລະ ໜີ້ສິນໃນປັດຈຸບັນ; ຫຼື ສະແດງເອກະສານສະແດງລາຍການເຄື່ອນໄຫວ ຍ້ອນຫຼັງຢ່າງໜ້ອຍ 12 ເດືອນ ຈາກ ທະນາຄານ.<br>2. ຕ້ອງມີພະນັກງານທີ່ມີຄວາມຮູ້ ແລະ ຄວາມເຂົ້າໃຈກ່ຽວກັບການບໍລິຫານຈັດການດ້ານການເງິນ. |
| 10 | ບັນຊີທະນາຄານ | ຕ້ອງມີບັນຊີທະນາຄານໃນນາມຊື່ບໍລິສັດ/ວິສາຫະກິດ ໃຫ້ຮຽບຮ້ອຍ ກ່ອນທີ່ຈະມີການເບີກຈ່າຍທຶນຊ່ວຍເຫຼືອລ້າ. |
| 11 | ການຈັດຊື້ | **ວິສາຫະກິດ ຕ້ອງປະຕິບັດດັ່ງນີ້:**<br>• ຕ້ອງມີພະນັກງານທີ່ມີຄວາມເຂົ້າໃຈພື້ນຖານກ່ຽວກັບກົດລະບຽບ ແລະ ຂັ້ນຕອນການຈັດຊື້-ຈັດຈ້າງ.<br>• ມີຄວາມຕັ້ງໃຈຮ່ວມມືຢ່າງໃກ້ຊິດກັບ ກອງທຶນ EFF ໃນການວາງແຜນ ແລະ ຈັດຕັ້ງປະຕິບັດການຈັດຊື້ ໃຫ້ຖືກຕ້ອງຕາມຂໍ້ກຳນົດຂອງ EFF;<br>• ມີຄວາມຕັ້ງໃຈສົ່ງບົດລາຍງານການຕິດຕາມການເງິນໃຫ້ EFF ເປັນປົກກະຕິ ໂດຍນຳໃຊ້ແບບຟອມ ແລະ ປະຕິບັດຕາມເງື່ອນໄຂທີ່ໂຄງການກຳນົດ. |
| 12 | ສະພາບການດຳເນີນທຸລະກິດ | Agri-MSMEs ຕ້ອງເປັນທຸລະກິດທີ່ມີການບໍລິຫານງານ ແລະ ການເງິນທີ່ເຂັ້ມແຂງ, ດຳເນີນກິດຈະການຢ່າງມີປະສິດທິພາບ ແລະ ບໍ່ຢູ່ໃນສະພາວະທີ່ມີບັນຫາໜີ້ສິນລົ້ນຕົວ. |
| 13 | ລາຍຮັບ | ຕ້ອງມີການຄາດຄະເນລາຍຮັບລວມຂອງທຸລະກິດໃນທາງບວກ ຕໍ່ເນື່ອງຢ່າງໜ້ອຍ 24 ເດືອນ ຂ້າງໜ້າ. |
| 14 | ທຶນຂອງເຈົ້າຂອງທຸລະກິດ | ຕ້ອງສາມາດພິສູດ ຫຼື ສະແດງໃຫ້ເຫັນເຖິງຄວາມພ້ອມຂອງທຶນສົມທົບເອງ ໃນສັດສ່ວນ 50% ເພື່ອນຳໃຊ້ເຂົ້າໃນການລົງທຶນ ແລະ ທຶນໝູນວຽນທີ່ກ່ຽວຂ້ອງ. |
| 15 | ທຶນຊໍ້າຊ້ອນ | ຕ້ອງບໍ່ມີການຍື່ນຂໍທຶນ ຫຼື ໄດ້ຮັບທຶນຊ່ວຍເຫຼືອລ້າຈາກແຫຼ່ງອື່ນ ສຳລັບແຜນການລົງທຶນອັນດຽວກັນນີ້. |
| 16 | ການຮ່ວມມືຂອງໂຄງການ | **ຕ້ອງໃຫ້ຄຳໝັ້ນສັນຍາເປັນລາຍລັກອັກສອນຕໍ່ ຄະນະບໍລິຫານໂຄງການ ເພື່ອປະຕິບັດດັ່ງນີ້:**<br>• ມີຄວາມຕັ້ງໃຈໃຫ້ຂໍ້ມູນ ແລະ ຂ່າວສານຕ່າງໆ ແກ່ຕົວແທນຂອງໂຄງການດ້ວຍຄວາມຈິງໃຈ;<br>• ຍິນຍອມ ແລະ ໃຫ້ການສະໜັບສະໜູນຢ່າງເຕັມທີ່ ໃນການກວດສອບຄວາມໜ້າເຊື່ອຖື ແລະ ຄວາມໂປ່ງໃສ ໂດຍຕົວແທນຈາກ ກອງທຶນ EFF ແລະ ໂຄງການ;<br>• ພ້ອມທີ່ຈະເສຍສະຫຼະເວລາ ແລະ ຄວາມພະຍາຍາມ ໃນການຮ່ວມມືກັບທີມງານໂຄງການ ເພື່ອຈັດທຳແຜນການລົງທຶນ ແລະ ແຜນການຈັດຊື້-ຈັດຈ້າງ. |
| 17 | ຄວາມພ້ອມ | ຕ້ອງມີຄວາມພ້ອມໃນການຈັດຕັ້ງປະຕິບັດແຜນການລົງທຶນ ແລະ ແຜນການຈັດຊື້-ຈັດຈ້າງ. |

# ມາດຖານເງື່ອນໄຂການສະໝັກ

| ລ/ດ | ຫົວຂໍ້ | ລາຍລະອຽດ |
|---|---|---|
| 18 | ການຄຸ້ມຄອງທາງສັງຄົມ | • ມີນະໂຍບາຍການຄຸ້ມຄອງດ້ານສັງຄົມທີ່ເໝາະສົມ<br>• ຕ້ອງໃຫ້ຄຳໝັ້ນສັນຍາ ແລະ ຄວາມສະໝັກໃຈທີ່ສາມາດກວດສອບໄດ້ ໃນການລົງທຶນເຂົ້າໃນການຜະລິດກະສິກຳແບບຍືນຍົງ, ມີທົນທານຕໍ່ການປ່ຽນແປງສະພາບພູມອາກາດ ແລະ ບໍ່ທຳລາຍປ່າໄມ້.<br>• ໃນກໍລະນີທີ່ກ່ຽວຂ້ອງ, ຕ້ອງໃຫ້ຄຳໝັ້ນສັນຍາທີ່ສາມາດກວດສອບໄດ້ ໃນການນຳໃຊ້ ສັນຍາແບບເປັນລາຍລັກອັກສອນ ຮ່ວມກັບຊາວກະສິກອນໃນໝູ່ບ້ານເປົ້າໝາຍ ໂດຍສັນຍາມັ້ນຕ້ອງສອດຄ່ອງກັບ ດຳລັດວ່າດ້ວຍການເຮັດກະສິກຳແບບພັນທະ (Contract Farming) ແລະ ມາດຕະຖານການປະຕິບັດທີ່ດີ (Good Practice Standards) ຂອງລັດຖະບານ. |
| 19 | ການຄຸ້ມຄອງຕໍ່ສິ່ງແວດລ້ອມ | • ຕ້ອງໃຫ້ຄຳໝັ້ນສັນຍາ ແລະ ຄວາມສະໝັກໃຈທີ່ສາມາດກວດສອບໄດ້ ໃນການລົງທຶນໃສ່ວິທີການຜະລິດກະສິກຳທີ່ຍືນຍົງຕໍ່ສິ່ງແວດລ້ອມ, ເປັນມິດຕໍ່ສະພາບພູມອາກາດ ແລະ ບໍ່ທຳລາຍປ່າໄມ້.<br>• ຕ້ອງມີນະໂຍບາຍດ້ານສິ່ງແວດລ້ອມທີ່ເໝາະສົມພາຍໃນວິສາຫະກິດ ແລະ ມີບົດບັນທຶກ ຫຼື ຫຼັກຖານກ່ຽວກັບຜົນສຳເລັດທີ່ຜ່ານມາທີ່ກ່ຽວຂ້ອງກັບການອະນຸລັກສິ່ງແວດລ້ອມ.<br>• ຕ້ອງມີໜັງສືຢັ້ງຢືນເປັນລາຍລັກອັກສອນຢ່າງເປັນທາງການ ຈາກ ພະແນກກະສິກຳ ແລະ ປ່າໄມ້ແຂວງ (PAE) ແລະ/ຫຼື ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ (DAE) ເພື່ອຢືນຢັນວ່າ: ການດຳເນີນງານຂອງວິສາຫະກິດແມ່ນສອດຄ່ອງກັບກົດໝາຍ ແລະ ລະບຽບການດ້ານສິ່ງແວດລ້ອມ ແລະ ສັງຄົມ ຂອງ ສປປ ລາວ ຢ່າງຄົບຖ້ວນ, ລວມທັງສອດຄ່ອງກັບ "ລາຍການກິດຈະກຳທີ່ບໍ່ໄດ້ຮັບການສະໜັບສະໜູນ" (Exclusion List) ຂອງໂຄງການ. |
| 20 | ກົນໄກການແກ້ໄຂຄຳຮ້ອງທຸກ | ຕ້ອງໃຫ້ຄຳໝັ້ນສັນຍາ ວ່າສາມາດກວດສອບໄດ້ ແລະ ໃຫ້ການສະໜັບສະໜູນຢ່າງຕັ້ງໜ້າ ໃນການນຳໃຊ້ ແລະ ເຜີຍແຜ່ 'ກົນໄກການແກ້ໄຂຄຳຮ້ອງທຸກ' ຂອງໂຄງການ SU-I-GFLM. |

## 5.2 ເງື່ອນໄຂຂອງການຜະລິດກະສິກຳ

ເພື່ອໃຫ້ມີສິດໄດ້ຮັບທຶນ, ການລົງທຶນຕ້ອງແມ່ນການລົງທຶນເຂົ້າໃນການຜະລິດກະສິກຳ ທີ່ສອດຄ່ອງກັບລາຍການທີ່ໄດ້ຮັບອະນຸຍາດຂອງໂຄງການ. ລາຍການທີ່ໄດ້ຮັບອະນຸຍາດ ແມ່ນລາຍຊື່ຂອງພືດກະສິກຳ ແລະ ລະບົບການຜະລິດ ທີ່ໄດ້ຮັບການອະນຸມັດຈາກໂຄງການ. ລາຍຊື່ບຸລິມະສິດດັ່ງກ່າວ ໄດ້ຖືກຄັດຕິດມາເປັນ ເອກະສານຊ້ອນທ້າຍ 2 ແລະ 3 ຂອງເອກະສານສະບັບນີ້.

## 5.3 ເງື່ອນໄຂຂອງການລົງທຶນ

ລາຍລະອຽດກ່ຽວກັບເງື່ອນໄຂຂອງການລົງທຶນ ເພື່ອຂໍຮັບການສະໜັບສະໜູນຈາກ ກອງທຶນສົ່ງເສີມທຸລະກິດກະສິກຳ ປະກອບມີສອງພາກສ່ວນ ຄື: ພາກສ່ວນທີໜຶ່ງ ແມ່ນໃຫ້ພາບລວມທີ່ຄົບຖ້ວນກ່ຽວກັບມາດຖານທີ່ການລົງທຶນຕ້ອງມີ ເພື່ອໃຫ້ຖືກຕ້ອງຕາມເງື່ອນໄຂ (ຕາຕະລາງ 2); ພາກສ່ວນທີສອງ ແມ່ນໃຫ້ພາບລວມສັງເຂບ (ເຊິ່ງບໍ່ໄດ້ຈຳກັດພຽງແຕ່ລາຍການທີ່ລະບຸໄວ້) ຂອງບັນດາການລົງທຶນທີ່ໄດ້ຮັບການພິຈາລະນາໃນທາງບວກວ່າ ເໝາະສົມແກ່ການຮັບການສະໜັບສະໜູນຈາກ ກອງທຶນສົ່ງເສີມທຸລະກິດກະສິກຳ (ຕາຕະລາງ 3).[3]

[3] ລາຍການສິ່ງທີ່ຕ້ອງຫ້າມ (Negative List) ຂອງບັນດາຂະແໜງການ ແລະ ກິດຈະກຳທີ່ບໍ່ໄດ້ຮັບອະນຸຍາດ ແມ່ນໄດ້ລະບຸໄວ້ໃນຕາຕະລາງທີ 5.

# ມາດຖານເງື່ອນໄຂການສະໝັກ

ຕາຕະລາງ *2:* ເງື່ອນໄຂສໍາລັບການລົງທຶນ

| ລ/ດ | ຫົວຂໍ້ | ລາຍລະອຽດ |
|---|---|---|
| 1 | ກໍາມະສິດ | ການລົງທຶນຕ້ອງເປັນການຈັດຊື້ຊັບສິນ ໃນນາມຊື່ຂອງທຸລະກິດກະສິກໍາ ແລະ ວິສາຫະກິດຕ້ອງເປັນເຈົ້າຂອງກໍາມະສິດໃນຊັບສິນນັ້ນໂດຍກົງ. |
| 2 | ປະເພດຊັບສິນ | ການລົງທຶນ ຄວນເນັ້ນໃສ່ ຊັບສິນຄົງທີ່ເພື່ອການຜະລິດ[4], ບໍ່ວ່າຈະເປັນຊັບສິນທີ່ຈັບຕ້ອງໄດ້ (ຕົວຢ່າງ: ອຸປະກອນ, ເຄື່ອງຈັກ, ໂຮງງານ, ສາງເກັບສິນຄ້າ, ສະຖານທີ່ເກັບມ້ຽນ, ເດີ່ນຕາກ, ລົດໄຖນາ) ຫຼື ຊັບສິນທີ່ບໍ່ຈັບຕ້ອງບໍ່ໄດ້ (ຕົວຢ່າງ: ການຢັ້ງຢືນມາດຕະຖານ, ການສ້າງຍີ່ຫໍ້). ສໍາລັບການລົງທຶນໃນຊັບສິນທາງການເງິນ ຫຼື ໃນຮູບແບບການຈັດຊື້ທີ່ດິນ ແມ່ນບໍ່ມີສິດໄດ້ຮັບທຶນ. |
| 3 | ນໍາໃຊ້ພາຍໃນທຸລະກິດເທົ່ານັ້ນ | ຊັບສິນທີ່ລົງທຶນນັ້ນ ຕ້ອງນໍາໃຊ້ເຂົ້າໃນ ວັດຖຸປະສົງທາງທຸລະກິດເທົ່ານັ້ນ |
| 4 | ຊັບສິນມືໜຶ່ງ | ຊັບສິນທີ່ນໍາມາລົງທຶນ ຕ້ອງເປັນ ຊັບສິນໃໝ່ (ມືໜຶ່ງ) ເຊິ່ງໝາຍເຖິງການຈັດຊື້ໂດຍກົງຈາກຜູ້ຜະລິດ ຫຼື ຜູ້ສະໜອງ ໃນຖານະຜູ້ຊົມໃຊ້ທໍາອິດ. |
| 5 | ພາຫະນະ | ພາຫະນະທຸກປະເພດ (ລົດຮັບ-ສົ່ງ, ລົດຂົນສົ່ງ) ແມ່ນ ບໍ່ມີສິດ ໄດ້ຮັບທຶນຊ່ວຍເຫຼືອລ້າ. |
| 6 | ຄວາມຖືກຕ້ອງທາງດ້ານກົດໝາຍ | ການຈັດຊື້ ແລະ ການຖືຄອງກໍາມະສິດຊັບສິນ ຕ້ອງສອດຄ່ອງກັບກົດໝາຍຢ່າງຄົບຖ້ວນ, ລວມທັງຕ້ອງໄດ້ຮັບໃບອະນຸຍາດຈາກຂະແໜງການທີ່ກ່ຽວຂ້ອງ. |
| 7 | ການປ້ອງກັນດ້ານສິ່ງແວດລ້ອມ ແລະ ສັງຄົມ | ການລົງທຶນຕ້ອງປະຕິບັດຕາມລະບຽບການປ້ອງກັນດ້ານສິ່ງແວດລ້ອມ ແລະ ສັງຄົມ ຂອງ ສປປ ລາວ ຢ່າງເຂັ້ມງວດ, ເຊິ່ງລວມມີເງື່ອນໄຂດັ່ງນີ້:<br><br>1. ກະກຽມ ບົດວິພາກກ່ຽວກັບການສຶກສາເບື້ອງຕົ້ນ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ ເບີ່ງ (IEE) ຫຼື ບົດວິພາກການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ (ESIA);[5]<br>2. ກະກຽມ ແຜນຕິດຕາມກວດກາສິ່ງແວດລ້ອມ ແລະ ສັງຄົມ (ESMP);<br>3. ຕ້ອງມີ ໃບຢັ້ງຢືນກວດກາສິ່ງແວດລ້ອມ ທີ່ອອກໂດຍ ຂະແໜງການຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ (MAE) ສໍາລັບແຜນການລົງທຶນທີ່ຍື່ນສະເໜີຂໍທຶນຊ່ວຍເຫຼືອສົມທົບ (MGF);[6]<br>4. ປະຕິບັດຕາມລະບຽບການທີ່ຫ້າມນໍາໃຊ້ສານເຄມີກະສິກໍາ ແລະ ສານອັນຕະລາຍອື່ນໆ.<br><br>ຄວາມສອດຄ່ອງທາງດ້ານກົດໝາຍນີ້ ຕ້ອງມີເອກະສານຢັ້ງຢືນ ແລະ ຜ່ານການກວດກາຢ່າງຄັກແນ່, ພ້ອມທັງໄດ້ຮັບການຢືນຢັນເປັນລາຍລັກອັກສອນຢ່າງເປັນທາງການ ຈາກພະແນກກະສິກໍາ ແລະ ປ່າໄມ້ແຂວງ ແລະ/ຫຼື ຫ້ອງການກະສິກໍາ ແລະ ປ່າໄມ້ເມືອງ. |
| 8 | ການນໍາໃຊ້ງານຕົວຈິງ | ລາຍຈ່າຍຕ່າງໆ ທີ່ໃຊ້ເຂົ້າໃນການລົງທຶນ ຈະຖືກຖືວ່າເປັນລາຍຈ່າຍທີ່ມີສິດຮັບທຶນ ກໍຕໍ່ເມື່ອຊັບສິນດັ່ງກ່າວ ສາມາດເປີດນໍາໃຊ້ງານໄດ້ຢ່າງເຕັມຮູບແບບ ພາຍໃນ 12 ເດືອນ ຫຼັງຈາກການລົງນາມໃນສັນຍາຮັບທຶນຊ່ວຍເຫຼືອສົມທົບ (Matching-grant Agreement). |
| 9 | ເອກະສານຢັ້ງຢືນດ້ານການເງິນ | ລາຍຈ່າຍຕ່າງໆ ທີ່ໃຊ້ເຂົ້າໃນການລົງທຶນ ຈະຖືກຖືວ່າເປັນລາຍຈ່າຍທີ່ມີສິດຮັບທຶນ ກໍຕໍ່ເມື່ອເປັນລາຍຈ່າຍທີ່ເກີດຂຶ້ນຈິງ, ມີລະບຸໄວ້ໃນແຜນງົບປະມານຂອງບົດສະເໜີໂຄງການ ແລະ ມີລາຍລະອຽດຄົບຖ້ວນໃນສັນຍາ, ໃບແຈ້ງໜີ້ ແລະ ໃບບິນຮັບເງິນ. ຜູ້ສະຫມັກ ຕ້ອງສະໜອງເອກະສານຢັ້ງຢືນທີ່ພຽງພໍ ກ່ຽວກັບການຈັດຊື້, ການສົ່ງມອບ ແລະ ການຊໍາລະເງິນສໍາລັບຊັບສິນດັ່ງກ່າວ ໃຫ້ສໍາເລັດຕາມໄລຍະເວລາທີ່ກໍານົດ ເພື່ອໃຫ້ລາຍຈ່າຍນັ້ນມີສິດໄດ້ຮັບທຶນ. |
| 10 | ຜົນໄດ້ຮັບທາງທຸລະກິດ | ການລົງທຶນໃນຊັບສິນຄົງທີ່ເພື່ອການຜະລິດ ຈະມີສິດໄດ້ຮັບທຶນ ກໍຕໍ່ເມື່ອ ສິ່ງເຫຼົ່ານັ້ນສາມາດຊ່ວຍໃຫ້ທຸລະກິດຂອງທ່ານມີກໍາໄລເພີ່ມຂຶ້ນໃນໄລຍະຍາວ. |

[4] ໝາຍເຖິງ: ຊັບສິນທີ່ສ້າງປະໂຫຍດໃຫ້ແກ່ຂະບວນການຜະລິດ ຫຼື ການຕະຫຼາດຢ່າງຍືນຍົງ, ເຊິ່ງມີອາຍຸການນໍາໃຊ້ຫຼາຍກວ່າໜຶ່ງປີ ຫຼື ຫຼາຍກວ່າໜຶ່ງຮອບວຽນການຜະລິດ. ການລົງທຶນໃນ ຊັບສິນໝູນວຽນ, ໝາຍເຖິງ ຊັບສິນທີ່ນໍາໃຊ້ໃຫ້ໝົດໄປພາຍໃນໜຶ່ງຮອບວຽນການດໍາເນີນງານ ຫຼື ໃຊ້ໃນການບໍລິຫານທຸລະກິດເປັນປົກກະຕິ (ເຊັ່ນ: ສິນຄ້າໃນສາງ/ສະຕັອກ) ແມ່ນບໍ່ສາມາດນໍາມາຂໍທຶນໄດ້

[5] ອີງຕາມການຈັດແບ່ງປະເພດການລົງທຶນ: ໂດຍອີງໃສ່ຂໍ້ຕົກລົງຂັ້ນລັດຖະມົນຕີ ຂອງກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ (ກຊສ) ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ ບັນຊີລາຍຊື່ໂຄງການລົງທຶນ ແລະ ກິດຈະກໍາຕ່າງໆ ທີ່ຕ້ອງໄດ້ເຮັດການສຶກສາເບື້ອງຕົ້ນ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ ຫຼື ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ (ເລກທີ 8056/ກຊສ, ລົງວັນທີ 17/12/2013)

[6] ອີງຕາມກົດໝາຍ, ດໍາລັດ ແລະ ຂໍ້ກໍານົດຂັ້ນລັດຖະມົນຕີທີ່ກ່ຽວຂ້ອງ: ເຊິ່ງລວມມີ (ແຕ່ບໍ່ຈໍາກັດພຽງແຕ່ເທົ່ານີ້) ດໍາລັດວ່າດ້ວຍການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ (ເລກທີ 21/ລບ, ລົງວັນທີ 31/01/2019), ຄໍາແນະນໍາຂອງ ກຊສ ວ່າດ້ວຍການສຶກສາເບື້ອງຕົ້ນ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ (ເລກທີ 8029/ກຊສ, ລົງວັນທີ 17/12/2013), ວ່າດ້ວຍການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ (ເລກທີ 8030/ກຊສ, ລົງວັນທີ 17/12/2013) ແລະ ວ່າດ້ວຍການຄຸ້ມຄອງສິ່ງເສດເຫຼືອອັນຕະລາຍ (ເລກທີ 744/ກຊສ, ລົງວັນທີ 11/02/2015).

# ມາດຖານເງື່ອນໄຂການສະໝັກ

ຕາຕະລາງ *3:* ລາຍການການລົງທຶນພ້ອມຕົວຢ່າງທີ່ມີສິດຮັບທຶນ

ພາບລວມຂອງການລົງທຶນທີ່ມີສິດໄດ້ຮັບການສະໜັບສະໜູນຈາກ ກອງທຶນສົ່ງເສີມທຸລະກິດກະສິກຳ MGFA ທີ່ໄດ້ລະບຸໄວ້ໃນຕາຕະລາງ 3 ເປັນພຽງແຕ່ຕົວຢ່າງເບື້ອງຕົ້ນເທົ່ານັ້ນ (ອາດມີລາຍການອື່ນໆອີກທີ່ສາມາດພິຈາລະນາໄດ້); ການລົງທຶນຮູບແບບອື່ນໆກໍອາດຈະໄດ້ຮັບການສະໜັບສະໜູນເຊັ່ນກັນ, ຖ້າຫາກການລົງທຶນເຫຼົ່ານັ້ນສອດຄ່ອງກັບມາດຖານທີ່ໄດ້ລະບຸໄວ້ໃນຕາຕະລາງ 2.

| ລ/ດ | ຫົວຂໍ້ | ລາຍລະອຽດ |
|---|---|---|
| 1 | ຄ່າຈ້າງຜູ້ຊ່ຽວຊານພາຍນອກ | ຄ່າໃຊ້ຈ່າຍນີ້ຈະລວມທຸກສັນຍາທີ່ບໍລິສັດຂອງທ່ານມີຮ່ວມຜູ້ຮັບເໝົາຍ່ອຍ ຫຼື ກັບບໍລິສັດອື່ນພາຍນອກ, ຕົວຢ່າງເຊັ່ນ;<br>• ຄ່າໃຊ້ຈ່າຍໃນການເຂົ້າຮ່ວມກອງປະຊຸມພາຍນອກ, ການສຳມະນາ ແລະ ການຝຶກອົບໂຮມ (ລວມການບໍລິການທັງໝົດທີ່ກ່ຽວຂ້ອງກັບກອງປະຊຸມ, ຕົວຢ່າງ ການອຳນວຍຄວາມສະດວກ). ຊ່ຽວຊານສາມາດເປັນບຸກຄົນ ຫຼື ນິຕິບຸກຄົນ ແຕ່ຕ້ອງມີລາຍລະອຽດກ່ຽວກັບຄວາມຕ້ອງການດ້ານເຕັກນິກຂອງຊ່ຽວຊານນັ້ນ ແລະ ຕ້ອງມີການກະກຽມເອກະສານ, ຂັ້ນຕອນການຄັດເລືອກຢ່າງເໝາະສົມ.<br>• ອຸປະກອນການຮຽນການສອນ ແລະ ຂໍ້ມູນຂ່າວສານ<br>• ການກະກຽມເຂົ້າຮຽນ<br>• ການໃຫ້ບໍລິການໃຫ້ຄຳປຶກສາ<br>• ຄ່າໃຊ້ຈ່າຍໃນການເດີນທາງ ແລະ ການຂົນສົ່ງ<br><br>ອາດຈະລວມເຖິງ;<br>• ການໄດ້ຮັບໃບຢັ້ງຢືນດ້ານຄວາມຍືນຍົງ ແລະ ສອດຄ່ອງກັບການປ່ຽນແປງດິນຟ້າອາກາດ<br>• ການໄດ້ຮັບໃບຢັ້ງຢືນ GMP ແລະ HACCP<br>• ການໄດ້ຮັບໃບຢັ້ງຢືນດ້ານຄຸນນະພາບ ຫຼື ຄວາມປອດໄພດ້ານອາຫານ<br>ຜູ້ໃຫ້ບໍລິການຝຶກອົບໂຮມຕ້ອງໄດ້ຮັບການຕົກລົງເຫັນດີຈາກຄະນະກຳມະການຄຸ້ມຄອງທຶນສົມທົບກ່ອນ |
| 2 | ຄ່າໃຊ້ຈ່າຍເດີນທາງ | ທຸກຄ່າໃຊ້ຈ່າຍເດີນທາງທີ່ກ່ຽວຂ້ອງກັບເປົ້າໝາຍຂອງກິດຈະກຳແມ່ນສາມາດໄດ້ຮັບຄືນ |
| 3 | ຄ່າໃຊ້ຈ່າຍສຳລັບວັດສະດຸ ແລະ ອຸປະກອນ | **ອຸປະກອນແປຮູບ, ເຊັ່ນ:**<br>• ເຄື່ອງອົບແຫ້ງ, ເຕົາອົບ<br>• ເຄື່ອງບົດ, ໂຮງສີ, ເຄື່ອງຕັດ, ເຄື່ອງຟາດເຂົ້າ, ເຄື່ອງປັ່ນ/ສັບ, ເຄື່ອງຍ່ອຍ/ທຸບ, ເຄື່ອງບີບອັດ<br>• ເຄື່ອງລ້າງ, ເຄື່ອງທຳຄວາມສະອາດ<br>• ເຄື່ອງຄັດແຍກ, ເຄື່ອງແຍກສິ່ງເຈືອປົນ, ເຄື່ອງຫວ່ຽງ ແລະ ອື່ນໆ<br>• ເຄື່ອງປະສົມ<br>• ເຄື່ອງອັດເມັດ<br>• ເຄື່ອງຂົ້ວ, ເຄື່ອງຄົ່ວກິນ/ເຕົາຕົ້ມ, ເຄື່ອງລົມຄວັນ<br>• ເຄື່ອງບັນຈຸຂວດ ແລະ ເຄື່ອງບັນຈຸກະປ໋ອງ<br>• ເຄື່ອງຂ້າເຊື້ອດ້ວຍລະບົບຄວາມຮ້ອນ<br>• ອຸປະກອນລະບົບຕ່ອງໂສ້ຄວາມເຢັນ (ເຊັ່ນ: ຕູ້ຢັນ, ຕູ້ແຊ່ ແລະ ອື່ນໆ)<br>• ຖັງໝັກດອງ<br>• ເຄື່ອງຫຸ້ມຫໍ່, ເຄື່ອງມ້ວນ, ເຄື່ອງພັນ/ຫໍ່ ແລະ ອື່ນໆ.<br><br>**ອຸປະກອນທີ່ໃຫ້ພະລັງງານແບບຍືນຍົງ ເຊັ່ນ:**<br>• ແຜງພະລັງງານແສງອາທິດ (ໂຊລາເຊວ),, ກັງຫັນລົມ, ກັງຫັນນໍ້າ<br>• ໝໍ້ໄຟ (ແບັດເຕີຣີ) ແລະ ອຸປະກອນອື່ນໆ ທີ່ຈຳເປັນ ສຳລັບການເຮັດວຽກຂອງລະບົບດັ່ງກ່າວ |
| 4 | ຄ່າໃຊ້ຈ່າຍອື່ນໆ | • ·ທຸກຄ່າໃຊ້ຈ່າຍທີ່ກ່ຽວຂ້ອງກັບການຝຶກອົບໂຮມໃຫ້ຊາວກະສິກອນຂະໜາດນ້ອຍ<br>• ·ຄ່າໃຊ້ຈ່າຍທີ່ກ່ຽວຂ້ອງກັບການທົດລອງ<br>• ຄ່າໃຊ້ຈ່າຍໃນການກວດສອບກອງທຶນສົມທົບ |

# ມາດຖານເງື່ອນໄຂການສະໝັກ

## 5.4 ເງື່ອນໄຂຂອງລາຍຈ່າຍ

ສະເພາະລາຍຈ່າຍທີ່ມີສິດຮັບທຶນເທົ່ານັ້ນ ທີ່ສາມາດໄດ້ຮັບການສົມທົບທຶນຈາກ MGFA ແລະ ສາມາດນໍາມາຄິດໄລ່ເປັນສ່ວນຮ່ວມສົມທົບທຶນ 50% ຂອງຜູ້ສະໝັກເຂົ້າໃນການລົງທຶນ. ລາຍຈ່າຍເຫຼົ່ານັ້ນ ຕ້ອງແມ່ນການຈ່າຍເພື່ອ 'ຊື້ໃຫ້ໄດ້ເປັນເຈົ້າຂອງ' ແລະ ເປັນລາຍຈ່າຍທີ່ 'ຈໍາເປັນ' ເພື່ອໃຫ້ເຄື່ອງຈັກ ຫຼື ອຸປະກອນນັ້ນໃຊ້ວຽກໄດ້ແທ້. ນອກຈາກນັ້ນ, ລາຍຈ່າຍທີ່ຈໍາເປັນເຫຼົ່ານີ້ ຈະເບີກໄດ້ກໍຕໍ່ເມື່ອ 'ຜູ້ຂາຍ' (Supplier) ເປັນຜູ້ຄິດໄລ່ລວມເຂົ້າໃນໃບບິນດຽວກັນ ແລະ ຈັດຢູ່ໃນປະເພດລາຍຈ່າຍດັ່ງນີ້:

- ຄ່າຂົນສົ່ງ ແລະ ຄ່າປະກັນໄພການຂົນສົ່ງ ພາຍໃນຂອບເຂດຊາຍແດນຂອງ ສປປ ລາວ;
- ຄ່າຕິດຕັ້ງ ແລະ ການຝຶກອົບຮົມການນໍາໃຊ້ຄັ້ງທໍາອິດ;
- ຄ່າບໍາລຸງຮັກສາ ແລະ ການຮັບປະກັນໃນປີທໍາອິດ.

ນອກຈາກນັ້ນ, ມີຫຼັກຖານຈະແຈ້ງ (ລະບຸໄດ້), ມີເຫດຜົນຈໍາເປັນ (ອະທິບາຍໄດ້), ມີເອກະສານຢັ້ງຢືນຄົບຖ້ວນ (ກວດສອບໄດ້) ແລະ ຕ້ອງຖືກຕ້ອງຕາມກົດໝາຍລາວ. ຕາຕະລາງ 4 ດ້ານລຸ່ມນີ້ ຈະໃຫ້ພາບລວມກ່ຽວກັບລາຍຈ່າຍທີ່ບໍ່ມີສິດຮັບທຶນ.



# ມາດຖານເງື່ອນໄຂການສະໝັກ

ຕາຕະລາງ *4:* ລາຍຈ່າຍທີ່ບໍ່ມີສິດຮັບທຶນ

| ລ/ດ | ຫົວຂໍ້ | ລາຍລະອຽດ |
|---|---|---|
| 1 | ການສະໜັບສະໜູນດ້ານວິຊາການ | ລາຍຈ່າຍສຳລັບການຊ່ວຍເຫຼືອດ້ານເຕັກນິກ ໃຫ້ແກ່ການບໍລິຫານ ແລະ ການດຳເນີນງານ ແມ່ນບໍ່ມີສິດຮັບທຶນ; ແຕ່ໃນທາງກົງກັນຂ້າມ, ຜູ້ທີ່ໄດ້ຮັບທຶນຈະໄດ້ຮັບການຊ່ວຍເຫຼືອດ້ານເຕັກນິກໂດຍບໍ່ໄດ້ເສຍຄ່າ ເຊິ່ງເປັນສ່ວນໜຶ່ງຂອງການສະໜັບສະໜູນຈາກໂຄງການຢູ່ແລ້ວ. |
| 2 | ດ້ານການເງິນ | ການຊຳລະໜີ້ສິນແມ່ນບໍ່ມີສິດຮັບທຶນ ເຖິງວ່າຈະແມ່ນໜີ້ທີ່ກູ້ຢືມມາເພື່ອຊື້ຊັບສິນຄົງທີ່ກໍຕາມ; ລວມທັງລາຍຈ່າຍອື່ນໆທີ່ກ່ຽວຂ້ອງ ເຊັ່ນ: ຄ່າປັບໄໝທາງການເງິນ ຫຼື ການຂາດທຶນຈາກອັດຕາແລກປ່ຽນ ກໍບໍ່ມີສິດຮັບທຶນເຊັ່ນກັນ. |
| 3 | ຊັບສິນໝູນວຽນ | ລາຍຈ່າຍສຳລັບຊັບສິນໝູນວຽນ (ຊັບສິນທີ່ໃຊ້ພາຍໃນໜຶ່ງຮອບວຽນການຜະລິດ ຫຼື ໃຊ້ໃນການດຳເນີນງານເປັນປົກກະຕິ) ແມ່ນບໍ່ລວມຢູ່ໃນທຶນຊ່ວຍເຫຼືອ, ຕົວຢ່າງ: ສິນຄ້າໃນສາງ. |
| 4 | ຕົ້ນທຶນການດຳເນີນງານ | ລາຍຈ່າຍສຳລັບຕົ້ນທຶນການດຳເນີນງານທຸກປະເພດແມ່ນບໍ່ມີສິດຮັບທຶນ, ຕົວຢ່າງ: ຄ່າສາທາລະນູປະໂພກ (ເຊັ່ນ: ຄ່າໄຟຟ້າ) |
| 5 | ເງິນເດືອນພະນັກງານ ແລະ ຄ່ານາຍໜ້າ | ລາຍຈ່າຍສຳລັບພະນັກງານ (ເງິນເດືອນ) ແລະ ຕົວແທນ/ນາຍໜ້າ (ຄ່າຄອມມິດຊັ່ນ) ແມ່ນບໍ່ມີສິດຮັບທຶນ. |
| 6 | ພາສີ-ອາກອນ | ການຊຳລະພາສີ-ອາກອນທຸກປະເພດ ແມ່ນບໍ່ມີສິດຮັບທຶນ ເຊັ່ນ: ອາກອນມູນຄ່າເພີ່ມ (VAT), ພາສີນຳເຂົ້າ ຫຼື ຄ່າທຳນຽມທາງພາສີຕ່າງໆ. |
| 7 | ປັດໄຈການຜະລິດ | ລາຍຈ່າຍສຳລັບປັດໄຈການຜະລິດໃຫ້ແກ່ຊາວກະສິກອນ ແມ່ນບໍ່ມີສິດຮັບທຶນ ບໍ່ວ່າຈະຢູ່ໃນຮູບແບບວັດຖຸ (ເຊັ່ນ: ແນວພັນ, ປຸ໋ຍ ແລະ ອື່ນໆ) ຫຼື ໃນຮູບແບບການໃຫ້ກູ້ຢືມ.[7] |
| 8 | ດ້ານກົດໝາຍ | ລາຍຈ່າຍດ້ານວຽກງານກົດໝາຍ ແມ່ນບໍ່ມີສິດຮັບທຶນ ເຊັ່ນ: ການດຳເນີນຄະດີຄວາມ, ການຄ້ຳປະກັນ ແລະ ການປະກັນໄພ. |
| 9 | ການຈັດສັນ, ການແຮໄວ້ | ການຕັ້ງງົບປະມານສຳຮອງທາງບັນຊີສຳລັບຜົນຂາດທຶນ ຫຼື ໜີ້ສິນໃນອະນາຄົດ, ລວມທັງເງິນສະສົມ ແລະ ເງິນສຳຮອງສຸກເສີນຕ່າງໆ ແມ່ນບໍ່ມີສິດຮັບທຶນ. |
| 10 | ກຳນົດເວລາ | ລາຍຈ່າຍໃນການລົງທຶນຈະບໍ່ມີສິດຮັບທຶນ ຫາກຊັບສິນນັ້ນຖືກຈັດຊື້ ຫຼື ຊຳລະເງິນ ກ່ອນ ວັນທີລົງນາມໃນສັນຍາຮັບທຶນ ລະຫວ່າງ ວິສາຫະກິດ ແລະ EFF. |

[7] ຢ່າງໃດກໍຕາມ, ຊັບສິນຄົງທີ່ (ເຄື່ອງຈັກ ຫຼື ອຸປະກອນ) ທີ່ວິສາຫະກິດກະສິກຳ ຂະໜາດນ້ອຍ ແລະ ກາງ (agri-MSME) ເປັນເຈົ້າຂອງ, ແຕ່ໄດ້ມອບໃຫ້ຊາວກະສິກອນທີ່ໄດ້ຮ່ວມມືກັນ ເປັນຜູ້ນຳໃຊ້ເຂົ້າໃນການຜະລິດ ຫຼື ການປຸງແຕ່ງເບື້ອງຕົ້ນ ເພື່ອສະໜອງຜົນຜະລິດຄືນໃຫ້ແກ່ວິສາຫະກິດນັ້ນ ແມ່ນຖືວ່າຖືກຕ້ອງຕາມເງື່ອນໄຂຮັບທຶນ.

# ມາດຖານເງື່ອນໄຂການສະໝັກ

ສຸດທ້າຍນີ້, ຕາຕະລາງທີ 5 ຂ້າງລຸ່ມໄດ້ລະບຸບັນຊີລາຍຊື່ບໍລິສັດ ແລະ ກິດຈະກຳທີ່ບໍ່ມີສິດໄດ້ຮັບການພິຈາລະນາໃນທຸກກໍລະນີ ແລະ ບໍ່ວ່າພາຍໃຕ້ສະພາບການໃດກໍຕາມ.

ຕາຕະລາງ *5.* ລາຍການກິດຈະກຳທີ່ບໍ່ມີສິດຮັບທຶນ

| ລ/ດ | ບໍລິສັດ ຫຼື ການລົງທຶນ ຈະ ບໍ່ມີສິດຮັບທຶນ ຫາກມີສ່ວນພົວພັນ ຫຼື ກ່ຽວຂ້ອງກັບກິດຈະກຳ ແລະ ຂໍ້ຫ້າມດັ່ງລຸ່ມນີ້ |
|---|---|
| 1 | ການຜະລິດ ຫຼື ການຄ້າຂາຍຜະລິດຕະພັນສັດປ່າ, ລວມທັງຜະລິດຕະພັນ ຫຼື ກິດຈະກຳອື່ນໆ ທີ່ຖືກກຳນົດວ່າຜິດກົດໝາຍ ພາຍໃຕ້ກົດໝາຍ ແລະ ລະບຽບການຂອງ ສປປ ລາວ, ຫຼື ຜິດຕໍ່ສົນທິສັນຍາ ແລະ ຂໍ້ຕົກລົງສາກົນ, ຫຼື ຢູ່ໃນບັນຊີສັ່ງຫ້າມຂອງສາກົນ. |
| 2 | ການຜະລິດ ຫຼື ການຄ້າຂາຍອາວຸດ ແລະ ຍຸດໂທປະກອນ. |
| 3 | ການຜະລິດ ຫຼື ການຄ້າຂາຍເຄື່ອງດື່ມທີ່ມີທາດເຫຼົ້າ (ຍົກເວັ້ນ ເບຍ ແລະ ວາຍ). |
| 4 | ການຜະລິດ, ການປຸງແຕ່ງ, ການຈັດການ, ການເກັບຮັກສາ ຫຼື ການຂາຍຢາສູບ ແລະ ຜະລິດຕະພັນທີ່ມີສ່ວນປະສົມຂອງຢາສູບ. |
| 5 | ການພະນັນ, ກາຊີໂນ ແລະ ວິສາຫະກິດທີ່ຄ້າຍຄືກັນ. |
| 6 | ການຄ້າຂາຍສັດປ່າ ຫຼື ຜະລິດຕະພັນສັດປ່າ ທີ່ຖືກຄວບຄຸມພາຍໃຕ້ສົນທິສັນຍາ CITES: https://cites.org/sites/default/files/eng/disc/species_02.10.2013.pdf |
| 7 | ການຜະລິດ ຫຼື ການຄ້າຂາຍວັດຖຸກຳມັນຕະພາບລັງສີ. ສິ່ງນີ້ບໍ່ລວມເຖິງການຈັດຊື້ອຸປະກອນການແພດ, ອຸປະກອນກວດສອບຄຸນນະພາບ (ການວັດແທກ) ແລະ ອຸປະກອນອື່ນໆ ທີ່ອົງການການເງິນສາກົນ (IFC) ພິຈາລະນາວ່າ ມີແຫຼ່ງກຳເນີດກຳມັນຕະພາບລັງສີໃນປະລິມານທີ່ໜ້ອຍຫຼາຍ ແລະ/ຫຼື ມີການປົກຫຸ້ມປ້ອງກັນຢ່າງແໜ້ນໜາ. |
| 8 | ການຜະລິດ, ການຄ້າຂາຍ ຫຼື ການນຳໃຊ້ໃຍຫີນອັດສະເບສໂຕສທີ່ບໍ່ມີການເກາະຕິດ (Unbounded asbestos fibres). ສິ່ງນີ້ບໍ່ລວມເຖິງການຈັດຊື້ ແລະ ການນຳໃຊ້ແຜ່ນຊີມັງທີ່ມີສ່ວນປະສົມຂອງໃຍຫີນໜ້ອຍກວ່າ 20%. |
| 9 | ໂຄງການ ຫຼື ກິດຈະກຳທີ່ມີການຫັນປ່ຽນ, ບຸກເບີກ ຫຼື ເຮັດໃຫ້ປ່າທຳມະຊາດ, ປ່າດົງດິບ ຫຼື ເຂດທີ່ຢູ່ອາໄສທາງທຳມະຊາດເສື່ອມໂຊມ. |
| 10 | ການຜະລິດ ຫຼື ການຄ້າຂາຍໄມ້ ແລະ ເຄື່ອງປ່າຂອງດົງ (NTFPs) ທີ່ໄດ້ມາແບບບໍ່ຍືນຍົງ, ຫຼື ສິນຄ້າໃດໆຈາກທຸລະກິດທີ່ມີສ່ວນພົວພັນກັບການຂັດຜົນປະໂຫຍດ ຫຼື ການກະທຳທີ່ບໍ່ໄດ້ຮັບອະນຸຍາດດ້ານສິ່ງແວດລ້ອມ ແລະ ສັງຄົມ. ສິ່ງນີ້ລວມເຖິງກິດຈະກຳທີ່ມີທ່າອ່ຽງເຮັດໃຫ້ບັນດາບ້ານໃກ້ຄຽງມີຄວາມສ່ຽງເພີ່ມຂຶ້ນຕໍ່ກັບໄພພິບັດທາງທຳມະຊາດ. |
| 11 | ການຜະລິດ ຫຼື ການຄ້າຂາຍຜະລິດຕະພັນທີ່ມີສ່ວນປະສົມຂອງສານ PCBs (Polychlorinated Biphenyls). |
| 12 | ການຜະລິດ ຫຼື ການຄ້າຂາຍຢາປິ່ນປົວພະຍາດ ທີ່ຖືກສາກົນສັ່ງຫ້າມ ຫຼື ຢູ່ໃນໄລຍະການຍົກເລີກການນຳໃຊ້. |
| 13 | ໂຄງການທີ່ພົວພັນກັບການຜະລິດເພື່ອການຄ້າຂອງສານທີ່ທຳລາຍຊັ້ນໂອໂຊນ (ODS) ຫຼື ການຜະລິດ ຫຼື ການນຳໃຊ້ສານມົນລະພິດທີ່ຕົກຄ້າງຍາວນານ (POPs) ທີ່ຖືກສັ່ງຫ້າມ ຫຼື ມີກຳນົດທີ່ຈະຍົກເລີກການຜະລິດ ແລະ ການນຳໃຊ້ຕາມຂໍ້ຕົກລົງສາກົນ ໃນໄລຍະການດຳເນີນໂຄງການ. |
| 14 | ການຜະລິດ, ການຈັດຊື້ ຫຼື ການຄ້າຂາຍຢາປາບສັດຕູພືດ, ຢາຂ້າແມງໄມ້, ຢາຂ້າຫຍ້າ ແລະ ສານເຄມີອັນຕະລາຍອື່ນໆ ທີ່ຖືກຫ້າມໂດຍສົນທິສັນຍາສາກົນ (ເຊັ່ນ: Stockholm) ຫຼື ລະບຽບຂອງອົງການອະນາໄມໂລກ (WHO), ຫຼື ຢູ່ໃນ "ບັນຊີສານເຄມີກະສິກຳທີ່ຖືກຫ້າມຢູ່ ສປປ ລາວ, ເດືອນມິຖຸນາ 2010" ໃນພາກທີ III ຂອງເອກະສານສະບັບນີ້. |
| 15 | ໂຄງການ ຫຼື ກິດຈະກຳທີ່ພົວພັນກັບການບັງຄັບເວນຄືນທີ່ດິນ, ເປັນເຫດໃຫ້ມີການຍົກຍ້າຍຈັດສັນແບບບໍ່ສະໝັກໃຈ, ການຍົກຍ້າຍປະຊາຊົນ, ສົ່ງຜົນກະທົບຕໍ່ສິດທິຄອບຄອງທີ່ດິນທີ່ຖືກຕ້ອງ ຫຼື ທີ່ດິນ ແລະ ການດຳລົງຊີວິດຂອງກຸ່ມຄົນຊົນເຜົ່າໂດຍບໍ່ໄດ້ຮັບການຍິນຍອມ, ກະທົບທາງກາຍະພາບຕໍ່ທີ່ຢູ່ອາໄສ, ຫຼື ນຳໃຊ້ໂຄງການເພື່ອສົ່ງເສີມການຍົກຍ້າຍບ້ານ ແລະ ການຮວມບ້ານ. |
| 16 | ໂຄງການ ຫຼື ກິດຈະກຳທີ່ສົ່ງຜົນກະທົບທາງລົບຕໍ່ຊຸມຊົນທ້ອງຖິ່ນ ຫຼື ກຸ່ມຄົນຊົນເຜົ່າ ຫຼື ກໍ່ໃຫ້ເກີດຄວາມເສຍຫາຍຢ່າງຫຼວງຫຼາຍຕໍ່ມໍລະດົກທາງວັດທະນະທຳ ຫຼື ສະຖານທີ່ທາງໂບຮານຄະດີ, ປະຫວັດສາດ, ສາສະໜາ ຫຼື ແຫຼ່ງທຳມະຊາດທີ່ມີຄຸນຄ່າ. |

# ມາດຖານເງື່ອນໄຂການສະໝັກ

ຕາຕະລາງ *5.* ລາຍການກິດຈະກຳທີ່ບໍ່ມີສິດຮັບທຶນ

| ລ/ດ | ບໍລິສັດ ຫຼື ການລົງທຶນ ຈະ ບໍ່ມີສິດຮັບທຶນ ຫາກມີສ່ວນພົວພັນ ຫຼື ກ່ຽວຂ້ອງກັບກິດຈະກຳ ແລະ ຂໍ້ຫ້າມດັ່ງລຸ່ມນີ້ |
|---|---|
| 17 | ການຜະລິດ ຫຼື ກິດຈະກຳທີ່ພົວພັນກັບການນຳໃຊ້ແຮງງານເດັກໃນຮູບແບບທີ່ເປັນອັນຕະລາຍ ຫຼື ການຂູດຮີດແຮງງານ ຫຼື ການບັງຄັບໃຊ້ແຮງງານ. |
| 18 | ໂຄງການທີ່ຕັ້ງຢູ່ໃນເຂດລະບົບນິເວດທີ່ບອບບາງ ແລະ ສະຖານທີ່ມໍລະດົກໂລກ. |
| 19 | ໂຄງການ ຫຼື ກິດຈະກຳທີ່ສົ່ງຜົນກະທົບຕໍ່, ຫຼື ນຳໄປສູ່ການຕັ້ງຖິ່ນຖານໃໝ່ ຫຼື ການຂະຫຍາຍບ່ອນຢູ່ອາໄສພາຍໃນເຂດທີ່ຖືກກຳນົດເປັນອຸທິຍານແຫ່ງຊາດ, ເຂດປ່າສະຫງວນ ຫຼື ເຂດອື່ນໆທີ່ບໍ່ໄດ້ຮັບອະນຸຍາດໃຫ້ເຮັດການກະສິກຳ ຫຼື ອາໄສຢູ່ ພາຍໃຕ້ຂອບວຽກງານ ເຊັ່ນ: ການວາງແຜນນຳໃຊ້ທີ່ດິນຂັ້ນບ້ານ (PLUP) ຫຼື ການແບ່ງເຂດຄຸ້ມຄອງປ່າສະຫງວນແຫ່ງຊາດ (NPA macro-zoning). |
| 20 | ໂຄງການຂຸດຄົ້ນ ຫຼື ການກໍ່ສ້າງ ຫຼື ກິດຈະກຳທີ່ຕັ້ງຢູ່ໃນ ຫຼື ສົ່ງຜົນກະທົບຕໍ່ທີ່ຢູ່ອາໄສທາງທຳມະຊາດ ຫຼື ເຂດປ່າສະຫງວນທີ່ມີຢູ່ແລ້ວ ຫຼື ຫຼື ເຂດທີ່ຢູ່ໃນແຜນການສະເໜີເປັນເຂດປ່າສະຫງວນ, ລວມທັງການເຮັດທາງ ຫຼື ການກໍ່ສ້າງໃດໆທີ່ມີທ່າອ່ຽງກໍ່ໃຫ້ເກີດຜົນກະທົບທາງລົບຕໍ່ສິ່ງແວດລ້ອມ. ສິ່ງນີ້ລວມເຖິງການພິຈາລະນາລະບຽບການທີ່ກ່ຽວຂ້ອງສຳລັບເຂດອະນຸລັກຂອງ IUCN ປະເພດ I-VI ແລະ ເຂດພື້ນທີ່ຊຸ່ມຊື່ນທີ່ມີຄວາມສຳຄັນລະດັບສາກົນ (Ramsar sites). |
| 21 | ການຜະລິດ, ການຄ້າຂາຍ, ການເກັບຮັກສາ ຫຼື ການຂົນສົ່ງສານເຄມີອັນຕະລາຍໃນປະລິມານຫຼາຍ ຫຼື ການນຳໃຊ້ສານເຄມີອັນຕະລາຍໃນລະດັບການຄ້າ. ສານເຄມີອັນຕະລາຍລວມມີ: ນ້ຳມັນແອັດຊັງ, ນ້ຳມັນກາດ ແລະ ຜະລິດຕະພັນນ້ຳມັນອື່ນໆ. |
| 22 | ການນຳເຂົ້າສາຍພັນພືດ/ສັດຕ່າງຖິ່ນ, ຍົກເວັ້ນສາຍພັນທີ່ມີຢູ່ແລ້ວໃນບໍລິເວນໃກ້ຄຽງ ຫຼື ເປັນທີ່ຮູ້ກັນວ່າບໍ່ແມ່ນສາຍພັນຮຸກຮານ, ແລະ ການນຳເຂົ້າພັນພືດດັດແປງພັນທຸກຳ (GMOs) ເຂົ້າໃນເຂດທີ່ກຳນົດຂອງໂຄງການ. |
| 23 | ພືດທີ່ຕ້ອງໃຊ້ສານທີ່ອາດເປັນອັນຕະລາຍໃນປະລິມານຫຼາຍ (ເບິ່ງຕາຕະລາງລຸ່ມນີ້) ແລະ ເປັນພືດທີ່ຖືກສັ່ງຫ້າມຊົ່ວຄາວໃນ ສປປ ລາວ ຕາມຂໍ້ຕົກລົງຂອງລັດຖະບານ (ຕົວຢ່າງ: ການປູກກ້ວຍ) |

# ມາດຖານເງື່ອນໄຂການສະໝັກ

ຕາຕະລາງ *6.* ລາຍຊື່ສານເຄມີກະສິກຳທີ່ຖືກຫ້າມນຳໃຊ້ ຢູ່ ສປປ ລາວ *(ສະບັບເດືອນມິຖຸນາ 2010)*

| ຢາຂ້າແມງໄມ້ ແລະ ຢາກຳຈັດແມງມຸມ/ໄຮ | ຢາຂ້າເຊື້ອລາ |
|---|---|
| 1. ອານດຣິນ (Aldrin) | 30. ບີນາພາຄຣິລ (Binapacryl) |
| 2. ບີເອັສຊີ (BHC) | 31. ແຄັບຕາຟອນ (Captafol) |
| 3. ຄລໍເດນ (Chlordane) | 32. ໄຊໂຄລເຮັກຊີໄມ (Cycloheximide) |
| 4. ຄລໍໄດມີຟອມ (Chlordimeform) | 33. ບາຫຼອດ ແລະ ທາດບາຫຼອດປະສົມ (Mercury and mercury compounds) |
| 5. ຄລໍເຟນວິນຟົດສ (Chlorfenvinphos) | 34. ເອັມອີເອັມຊີ (MEMC) |
| 6. ຄລໍໄທໂອຟົດສ (Chlorthiophos) | 35. ພີເອັມເອ (PMA) |
| 7. ໄຊເຮັກຊາທິນ (Cyhexatine) | 36. ທາດຊີລີນຽມປະສົມ (Selenium compound) |
| 8. ດີດີທີ (DDT) | ຢາກຳຈັດໝູ |
| 9. ດີນດຣິນ (Dieldrin) | 37. ຄລໍໂຣເບນຊີເລດ (Chlorobenzilate) |
| 10. ໄດມີຟົກ (Dimefox) | 38. ໂຊດຽມ ຟລູໂອໂຣອາເຊເຕດ (Sodium fluoroacetate) |
| 11. ໄດໄນໂຕຣເຄຣຊອນ (Dinitrocresol) | ຢາຂ້າຫຍ້າ |
| 12. ດີມີຕອນ (Demeton) | 39. 2, 4, 5 – ທີ (2, 4, 5 –T) |
| 13. ເອນດຣິນ (Endrin) | 40. ໄດໂນເຊັບ (Dinoseb) |
| 14. ເອນໂດຊານຟານ (Endosulfan) | 41. ໄດໂນເຕີບ ອາເຊເຕດ (Dinoterb acetate) |
| 15. ເອທິລ ພາຣາໄທອອນ (Ethyl Parathion) | 42. ພາຣາຄວັດ (Paraquat) |
| 16. ອີພີເອັນ (EPN) | 43. ໂຊດຽມ ຄລໍເຣດ (Sodium chlorate) |
| 17. ເຮັບຕາຄລໍ (Heptachlor) | ຢາພົ່ນ |
| 18. ເຮັກຊາຄລໍໂຣ ໄຊໂຄລເຮັກເຊນ (Hexachloro cyclohexane) | 44. ອີດີບີ (EDB) |
| 19. ເລັບໂຕຟົດສ (Leptophos) | 45. ເອທີລີນ ອົກໄຊ (Ethylene oxide) |
| 20. ລິນເດນ (Lindane) | 46. ເມທິລ ໂບຣໄມ (Methyl bromide) |
| 21. ເມທາມີໂດຟົດສ (Methamidophos) | ສານອື່ນໆ |
| 22. ເມໂທມິລ (Methomyl) | 47. ທາດອາເຊນິກປະສົມ (ທາດສານໜູ) (Arsenic compound) |
| 23. ເມທິລ ພາຣາໄທອອນ (Methyl parathion) | 48. ແຄລຊຽມ ອາເຊເນດ (Calcium arsenate) – ຢາຂ້າຫຍ້າ, ຢາຂ້າໜູ, ຢາຂ້າຫອຍ, ຢາຂ້າແມງໄມ້ |
| 24. ໂມໂນໂຄຣໂຕຟົດສ (Monocrotophos) | 49. ດີບີຊີພີ (DBCP) – ຢາກຳຈັດປະເພດໜອນກິນຮາກພືດ (Nematocidide) |
| 25. ໂພລີຄລໍໂຣແຄມຟີນ (Polychlorocamphene) | 50. ດາມີໂນໄຊ (Daminozide) – ສານຄວບຄຸມການຈະເລີນເຕີບໂຕຂອງພືດ |
| 26. ໂຟເຣດ (Phorate) | 51. ຟລູໂອໂຣອາເຊຕາມາຍ (Fluoroacetamide) – ຢາຂ້າແມງໄມ້, ຢາຂ້າໜູ |
| 27. ຊະຣາແດນ (Schradan) | 52. ອົກຊາມິລ (Oxamyl) – ຢາຂ້າແມງໄມ້, ຢາຂ້າແມງມຸມ/ໄຮ, ຢາຂ້າປວກ |
| 28. ທີອີພີພີ (TEPP) | 53. ຟົສຟາມິດອນ (Phosphamidon) – ຢາຂ້າແມງໄມ້, ຢາກຳຈັດປະເພດໜອນກິນຮາກພືດ |
| 29. ທອກຊາຟີນ (Toxaphene) | 54. ໂຊດຽມ ອາເຊໄນ (Sodium Arsenite) – ຢາຂ້າແມງໄມ້, ຢາຂ້າເຊື້ອລາ, ຢາຂ້າຫຍ້າ, ຢາຂ້າໜູ |
| | 55. ທາລຽມ (I) ຊຸນເຟດ (Thallium (i) sulfate) – ຢາຂ້າໜູ, ຢາຂ້າແມງໄມ້ |

# ການສະໜັບສະໜູນໃບຄຳຮ້ອງສະໝັກ

**ກອງປະຊຸມສຳມະນາເພື່ອສະໜັບສະໜູນໃບຄຳຮ້ອງສະໝັກ.** ແມ່ນເພື່ອສ້າງຄວາມຮັບຮູ້ ແລະ ຄວາມເຂົ້າໃຈກ່ຽວກັບວິທີການຂອງ MGFA ກໍ່ຄື ເງື່ອນໄຂການໄດ້ຮັບທຶນ, ຂັ້ນຕອນ ແລະ ວິທີການກອກແບບຟອມການສະໝັກ, ຄະນະຄຸ້ມຄອງ MGFA ຈະຈັດກອງປະຊຸມສຳມະນາແນະນຳຂຶ້ນ ໃນ 6 ແຂວງເປົ້າໝາຍຂອງໂຄງການ ໃນລະຫວ່າງເດືອນ ມິຖຸນາ ແລະ ເດືອນ ກໍລະກົດ ປີ 2026 ນີ້. ກອງປະຊຸມເປີດຕົວດັ່ງກ່າວ ຈະໃຫ້ພາບລວມຂອງການປະກາດຮັບບົດສະເໜີ, ໃຫ້ຄຳແນະນຳຢູ່ກັບທີ່ ແກ່ແຕ່ລະທຸລະກິດກະສິກຳໃນການກອກແບບຟອມການສະໝັກ ແລະ ການລົງທຶນ ແລະ ມີຈຸດປະສົງເພື່ອຕອບຄຳຖາມຕ່າງໆຈາກຜູ້ເຂົ້າຮ່ວມ. ກອງປະຊຸມເຜີຍແຜ່ນີ້ ແມ່ນຈັດຂຶ້ນເພື່ອເປັນການບໍລິການໃຫ້ແກ່ທຸລະກິດກະສິກຳທີ່ກຳລັງພິຈາລະນາສະໝັກ. ທຸກຄ່າໃຊ້ຈ່າຍ ແລະ ເງິນເບ້ຍລ້ຽງ (ອັດຕາກິນ) ທີ່ເກີດຂຶ້ນຈາກການເຂົ້າຮ່ວມ ຈະຢູ່ໃນຄວາມຮັບຜິດຊອບຂອງວິສາຫະກິດເອງທັງໝົດ, ໂດຍທາງຜູ້ຈັດງານຈະບໍ່ມີການຊົດເຊີຍໃດໆ

**ການລົງທະບຽນເຂົ້າຮ່ວມກອງປະຊຸມເພື່ອຊ່ວຍຜູ້ທີ່ສົນໃຈສະໝັກ.** ທຸລະກິດກະສິກຳທີ່ສົນໃຈເຂົ້າຮ່ວມກອງປະຊຸມ ຕ້ອງຕິດຕໍ່ຫາໜ່ວຍງານປະສານງານຂອງກອງທຶນ ທຶນສົມທົບ ຕາມອີເມວ ແລະ ເບີໂທລະສັບທີ່ໃຫ້ມາໃນເອກະສານນີ້ ແລະ ຕ້ອງລະບຸສະຖານທີ່ທີ່ຕ້ອງການເຂົ້າຮ່ວມ. ກອງປະຊຸມຈະຈັດຢູ່: ແຂວງໄຊຍະບູລີ, ຫຼວງພະບາງ, ຫົວພັນ, ອຸດົມໄຊ, ຫຼວງນ້ຳທາ ຫຼື ແຂວງບໍ່ແກ້ວ. ໃນອີເມວ ຕ້ອງລະບຸຊື່ ແລະ ຂໍ້ມູນຕິດຕໍ່ຂອງວິສາຫະກິດ, ລວມທັງຊື່ ແລະ ຕຳແໜ່ງຂອງບຸກຄົນທີ່ຈະເຂົ້າຮ່ວມກອງປະຊຸມ (ບໍ່ເກີນ 2 ທ່ານ ຕໍ່ໜຶ່ງວິສາຫະກິດ).

ບັນດາທຸລະກິດກະສິກຳທີ່ໄດ້ສະໝັກເຂົ້າຮ່ວມກອງປະຊຸມສຳມະນາ ຈະໄດ້ຮັບການແຈ້ງຕອບກ່ຽວກັບ ວັນທີ, ເວລາ ແລະ ສະຖານທີ່ຈັດງານທີ່ແນ່ນອນ. ໃນກໍລະນີທີ່ມີຈຳນວນຜູ້ສະໝັກເຂົ້າຮ່ວມຫຼາຍກວ່າຈຳນວນທີ່ສາມາດຮອງຮັບໄດ້, ຜູ້ຈັດງານຂໍສະຫງວນສິດໃນການຄັດເລືອກວິສາຫະກິດທີ່ຈະເຂົ້າຮ່ວມ.

## → ຂໍ້ມູນຕິດຕໍ່ ຂອງໜ່ວຍງານປະສານງານສຳລັບ ກອງທຶນ ທຶນສົມທົບ


ອີເມວ: mgfa.lao@giz.de
ເບີໂທລະສັບ: (+85620) 59 63 60 53
ທີ່ຢູ່: ອົງການຮ່ວມມືສາກົນຂອງເຢັນລະມັນ (GIZ)
ກົມປ່າໄມ້, ກະຊວງກະສິກຳ ແລະ ສິ່ງແວດລ້ອມ,
ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປລາວ ຕູ້ໄປສະນີ P.O Box 1295




# ຂັ້ນຕອນການຄັດເລືອກ



**ຈະມີຫຍັງເກີດຂຶ້ນ ຫຼັງຈາກການຍື່ນໃບສະໝັກ?** ພາຍຫຼັງສິ້ນສຸດກຳນົດເວລາການຍື່ນ ແບບຟອມການສະໝັກ ແລະ ບົດສະເໜີ, ຕົວແທນດ້ານເຕັກນິກຂອງ MGFA ພາຍໃຕ້ການຊີ້ນຳຂອງຄະນະຄຸ້ມຄອງ MGFA ຈະກວດກາຄືນແຕ່ລະແບບຟອມການສະໝັກ ແລະ ບົດສະເໜີການລົງທຶນ. ການກວດກາຈະເນັ້ນໃສ່ຄວາມສອດຄ່ອງກັບມາດຖານເງື່ອນໄຂ, ຄວາມເປັນໄປໄດ້ຂອງບົດສະເໜີການລົງທຶນ ແລະ ການປະກອບສ່ວນເຂົ້າໃນການບັນລຸຈຸດປະສົງຂອງໂຄງການ. ໃນກໍລະນີທີ່ຂໍ້ມູນທີ່ຍື່ນມານັ້ນເຫັນວ່າບໍ່ຄົບຖ້ວນ ຫຼື ບໍ່ຊັດເຈນ, ຕົວແທນຂອງໂຄງການຈະຕິດຕໍ່ຫາວິສາຫະກິດທາງໂທລະສັບ ຫຼື ອີເມວ ເພື່ອຂໍຂໍ້ມູນເພີ່ມເຕີມ ແລະ ຄຳອະທິບາຍ. ວິສາຫະກິດທີ່ໄດ້ຍື່ນແບບຟອມການສະໝັກ ແລະ ບົດສະເໜີການລົງທຶນ ທີ່ຄົບຖ້ວນ ແລະ ຖືກຕ້ອງຕາມເງື່ອນໄຂ ຈະໄດ້ຮັບການຕິດຕໍ່ເພື່ອລົງຢ້ຽມຢາມຕົວຈິງ ພ້ອມທັງດຳເນີນການກວດສອບຂັ້ນຕອນຕ່າງໆທີ່ຈຳເປັນ (Due diligence) ແລະ ກະກຽມ ແຜນພັດທະນາທຸລະກິດ, ແຜນການລົງທຶນ ແລະ ແຜນການຈັດຊື້ ທີ່ຊັດເຈນ.



**ການກະກຽມລົງຢ້ຽມຢາມກັບທີ່**: ຕົວແທນ MGFA ຈະຕິດຕໍ່ຫາຜູ້ສະໝັກເພື່ອຮ່ວມກັນວາງແຜນກຳນົດວັນຢ້ຽມຢາມຕົວຈິງ, ອະທິບາຍຈຸດປະສົງຂອງການຢ້ຽມຢາມ ແລະ ຂັ້ນຕອນຕ່າງໆທີ່ກ່ຽວຂ້ອງ, ພ້ອມທັງຈັດການໃຫ້ວິສາຫະກິດລົງລາຍເຊັນໃນ "ໜັງສືຢັ້ງຢືນການໃຫ້ຄຳໝັ້ນສັນຍາ" (Letter of Commitment). ຜ່ານການລົງລາຍເຊັນໃນໜັງສືດັ່ງກ່າວ, ເຈົ້າຂອງວິສາຫະກິດ ຢັ້ງຢືນການໃຫ້ຄຳໝັ້ນສັນຍາທີ່ຈະເສຍສະຫຼະເວລາ ແລະ ຄວາມພະຍາຍາມໃນການເຮັດວຽກຮ່ວມກັບຕົວແທນໂຄງການ ເພື່ອກະກຽມ ແຜນພັດທະນາທຸລະກິດ, ແຜນການລົງທຶນ ແລະ ແຜນການຈັດຊື້, ແລກປ່ຽນຂໍ້ມູນຂ່າວສານບົນພື້ນຖານຄວາມໄວ້ເນື້ອເຊື່ອໃຈ ແລະ ໃຫ້ການສະໜັບສະໜູນຕົວແທນໂຄງການຢ່າງຕັ້ງໜ້າໃນການດຳເນີນການກວດສອບຄວາມພ້ອມ, ລວມທັງການກວດສອບຂໍ້ມູນກັບພາກສ່ວນພາຍນອກ.



**ການຢ້ຽມຢາມກັບທີ່:** ໃນລະຫວ່າງການຢ້ຽມຢາມຕົວຈິງ, ຕົວແທນ MGFA ຈະປະສານງານຢ່າງໃກ້ຊິດກັບເຈົ້າຂອງວິສາຫະກິດ ຫຼື ຜູ້ບໍລິຫານຂັ້ນສູງທີ່ໄດ້ຮັບມອບໝາຍ ເພື່ອດຳເນີນການກວດສອບຂັ້ນຕອນຕ່າງໆທີ່ຈຳເປັນ ແລະ ສະໜັບສະໜູນການກະກຽມ ແຜນພັດທະນາທຸລະກິດ, ແຜນການລົງທຶນ, ແຜນການຈັດຊື້ ແລະ ງົບປະມານ. ແຜນການດັ່ງກ່າວຕ້ອງສະແດງໃຫ້ເຫັນຢ່າງຊັດເຈນເຖິງການເຊື່ອມໂຍງກັບຄວາມຍືນຍົງ, ພ້ອມທັງລະບຸຂໍ້ມູນກ່ຽວກັບການຈັດການສິ່ງເສດເຫຼືອ ແລະ ມົນລະພິດ ທີ່ເກີດຈາກຂະບວນການຜະລິດຕາມປົກກະຕິ. ຂັ້ນຕອນການກວດສອບຄວາມພ້ອມຈະນຳໃຊ້ "ເຄື່ອງມືການກວດສອບຄູ່ຮ່ວມທຸລະກິດ" (Business Partner Screening Tool) ເພື່ອບັນທຶກຄວາມສອດຄ່ອງ, ປະເມີນການຄຸ້ມຄອງການເງິນ ແລະ ການດຳເນີນງານ ເຊິ່ງລວມມີການກວດສອບ ແລະ ການຢືນຢັນເປັນລາຍລັກອັກສອນຈາກແຫຼ່ງຂໍ້ມູນພາຍນອກ ເຊັ່ນ: ພະນັກງານຂອງ MAE, ຊາວກະສິກອນ ແລະ ອາດຈະລວມເຖິງຜູ້ຊື້ ແລະ ຜູ້ສະໜອງ. ຕົວແທນ MGFA ຈະລາຍງານຜົນການກວດສອບເປັນລາຍລັກອັກສອນຕໍ່ຄະນະຄຸ້ມຄອງ MGFA ເພື່ອພິຈາລະນາ.



**ການຍື່ນ ແລະ ການກວດສອບແຜນການລົງທຶນ ແລະ ການຈັດຊື້**: ພາຍຫຼັງການຢ້ຽມຢາມຕົວຈິງ, ເຈົ້າຂອງວິສາຫະກິດຄວນລົງລາຍເຊັນ ແລະ ຍື່ນ ແຜນພັດທະນາທຸລະກິດ, ແຜນການລົງທຶນ, ແຜນການຈັດຊື້ ແລະ ງົບປະມານ ໃຫ້ແກ່ ກອງທຶນ ທຶນສົມທົບ (MGFA) ຢ່າງເປັນທາງການ ແລະ ຮ້ອງຂໍທຶນສົມທົບ. ແຕ່ລະຊຸດແຜນການ ແລະ ງົບປະມານ ຈະຖືກກວດກາຄືນໂດຍຕົວແທນຄະນະຄຸ້ມຄອງ MGFA ຈາກ ກົມປ່າໄມ້ (DOF), ກອງທຶນ EFF ແລະ GIZ, ຮ່ວມກັບຜົນການກວດສອບຄວາມພ້ອມຈາກການລົງຢ້ຽມຢາມກັບທີ່. ການກວດກາຄືນຈະເນັ້ນໃສ່ຄວາມສອດຄ່ອງກັບມາດຖານເງື່ອນໄຂ, ຄວາມເຂັ້ມແຂງຂອງແຜນການ ແລະ ການປະກອບສ່ວນເຂົ້າໃນຈຸດປະສົງຂອງໂຄງການ. ສຸດທ້າຍ, ຄະນະຄຸ້ມຄອງ MGFA ຈະກວດກາຄືນ ແລະ ຕັດສິນອະນຸມັດ ຫຼື ປະຕິເສດແຜນການທີ່ຍື່ນມາ ແລະ ແຈ້ງຕອບໃຫ້ຜູ້ສະໝັກແຕ່ລະລາຍຊາບເປັນລາຍລັກອັກສອນ ກ່ຽວກັບຜົນການກວດກາ ແລະ ການຕັດສິນໃຈ.

# ຂັ້ນຕອນການຄັດເລືອກ

**ລະບົບການໃຫ້ຄະແນນ:** ໃນກໍລະນີທີ່ມີຜູ້ສະໝັກຜ່ານການອະນຸມັດຫຼາຍ ແລະ ມູນຄ່າທຶນຊ່ວຍເຫຼືອລ້າທີ່ທຸກບໍລິສັດຂໍມານັ້ນ ລວມກັນແລ້ວສູງເກີນ 1.8 ລ້ານເອີໂຣ, ທຸກໆແຜນການທີ່ມີສິດຮັບທຶນ ຈະຖືກໃຫ້ນ້ຳໜັກຄະແນນ ແລະ ຈັດລຽງລຳດັບໂດຍນຳໃຊ້ຕາຕະລາງດັ່ງຕໍ່ໄປນີ້:

| | ອົງປະກອບ | ຄະແນນ 1-10 | ອັດຕາສ່ວນ | ຄະແນນ ອັດຕາສ່ວນ |
|---|---|---|---|---|
| | **ຄວາມເຂັ້ມແຂງ ດ້ານການຄຸ້ມຄອງ ແລະ ຕຳແໜ່ງໃນຕະຫຼາດ ຂອງ ທຸລະກິດ-ກະສິກຳ** | | | |
| 1. | ການຂະຫຍາຍໂຕ ແລະ ການພັດທະນາຂອງຕ່ອງໂສ້ ມູນຄ່າເພີ່ມ | | 8% | |
| 2. | ຄວາມເຂັ້ມແຂງຂອງຕຳແໜ່ງໃນຕະຫຼາດຂອງ ທຸລະກິດກະສິກຳ | | 8% | |
| 3. | ຂີດຄວາມສາມາດໃນການບໍລິຫານຍຸດທະສາດ ແລະ ການເງິນ ຂອງ ທຸລະກິດກະສິກຳ | | 8% | |
| 4. | ຄວາມເຂັ້ມແຂງ ດ້ານການດຳເນີນງານ ຂອງທຸລະກິດ ກະສິກຳ | | 8% | |
| | **ຄຳໝັ້ນສັນຍາຂອງ ທຸລະກິດ-ກະສິກຳ ຕໍ່ ຈຸດປະສົງຂອງ ໂຄງການ** | | | |
| 5. | ຄຳໝັ້ນສັນຍາຂອງ ທຸລະກິດ-ກະສິກຳ ຕໍ່ ຕ່ອງໂສ້ມູນຄ່າກະສິກຳ ແບບຍືນຍົງ ແລະ ບໍ່ມີການທຳລາຍປ່າໄມ້ | | 20% | |
| 6. | ຄຳໝັ້ນສັນຍາ ຂອງ ທຸລະກິດກະສິກຳ ຕໍ່ ການຮ່ວມມື ທີ່ມີໂຄງສ້າງ, ມີຄວາມຮັບຜິດຊອບ ແລະ ມີຜົນປະໂຫຍດຕໍ່ກັນ ກັບ ຊາວກະສິກອນ | | 20% | |
| | **ຂະໜາດ ການດຳເນີນງານ ຂອງ ທຸລະກິດ-ກະສິກຳ** | | | |
| 7. | ຈຳນວນຊາວກະສິກອນ, ທີ່ນຳໃຊ້ ຫຼັກການປະຕິບັດ ການເຮັດກະສິກຳແບບຍືນຍົງ, ທີ່ຖືກຄຸ້ມຄອງ ທາງກົງ ແລະ ທາງອ້ອມ ໂດຍ ທຸລະກິດ-ກະສິກຳ | | 14% | |
| 8. | ຈຳນວນເນື້ອທີ່ເປັນເຮັກຕາ ຂອງ ທີ່ດິນກະສິກຳ ທີ່ໄດ້ຮັບການຄຸ້ມຄອງ ແບບຍືນຍົງ | | 14% | |
| | ລວມ | | 100% | |

**ການອະນຸມັດ, ການເຮັດສັນຍາ ແລະ ການຈັດຕັ້ງປະຕິບັດ:** ຄະນະຄຸ້ມຄອງ ກອງທຶນທຶນສົມທົບ ຈະສົ່ງແຜນການລົງທຶນ ແລະ ການຈັດຊື້ ທີ່ໄດ້ຮັບການອະນຸມັດ ໃຫ້ແກ່ ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ (EFF), ພ້ອມທັງມອບໝາຍ ແລະ ສະເໜີໃຫ້ ກອງທຶນ EFF ດຳເນີນການເຊັນສັນຍາທຶນສົມທົບ ກັບບັນດາທຸລະກິດກະສິກຳທີ່ໄດ້ຮັບການອະນຸມັດ. ກອງທຶນ EFF ຈະເປັນຜູ້ຕິດຕາມກວດກາການຈັດຕັ້ງປະຕິບັດ ແຜນການລົງທຶນ ແລະ ການຈັດຊື້ ພ້ອມທັງດຳເນີນການເບີກຈ່າຍທຶນຊ່ວຍເຫຼືອລ້າເປັນແຕ່ລະງວດ.

# ໄລຍະເວລາຄາດຄະແນ ຂອງ ການເປີດຮັບບົດສະເໜີໂຄງການ

**ຂັ້ນຕອນ 1**

**ການປະກາດເປີດຮັບບົດສະເໜີໂຄງການ**

ການປະກາດເປີດຮັບບົດສະເໜີໂຄງການ ໂດຍໜ່ວຍງານຄຸ້ມຄອງໂຄງການຂັ້ນສູນກາງ (NPMU) ຂອງ SU-I-GFLM / ທີມງານຄຸ້ມຄອງ MGFA ແລະ ການເຜີຍແຜ່ຂໍ້ມູນຜ່ານເວັບໄຊທ໌ຂອງຄູ່ຮ່ວມງານໂຄງການ.

**ຂັ້ນຕອນ 2**

**ກອງປະຊຸມຊີ້ແຈງ ແລະ ແນະນຳໂຄງການ ຢູ່ຂັ້ນແຂວງ (ທັງໝົດ 6 ແຂວງ)**

ກອງປະຊຸມເປີດຕົວໂຄງການ:

- ·ການແນະນຳ ແລະ ອະທິບາຍຂັ້ນຕອນການສະໝັກ ແລະ ເກນການຄັດເລືອກ ພ້ອມທັງການຖາມ-ຕອບ.
- ການລົງພື້ນທີ່ເພື່ອຊ່ວຍເຫຼືອທຸລະກິດກະສິກຳໃນການຂຽນໃບສະໝັກ.

**ຂັ້ນຕອນ 3**

**ການຍື່ນໃບສະໝັກ ແລະ ບົດສະເໜີແຜນການລົງທຶນ**

ມື້ສຸດທ້າຍ ໃນການສົ່ງໃບສະໝັກ ແລະ ແບບຟອມບົດສະເໜີແຜນການລົງທຶນແມ່ນວັນທີ 31/7/2026.

**ຂັ້ນຕອນ 4**

**ການລົງທະບຽນເອກະສານ, ການກວດສອບ ແລະ ການສອບຖາມຂໍ້ມູນເພີ່ມເຕີມ (ແບບທາງໄກ).**
**ການຄັດເລືອກຜູ້ຜ່ານເກນເບື້ອງຕົ້ນ (Short-list) ເພື່ອລົງກວດກາຕົວຈິງ.**

- ການລົງທະບຽນໃບສະໝັກ ໂດຍໜ່ວຍງານປະສານງານ MGFA.
- ການຕິດຕາມສອບຖາມຂໍ້ມູນເພີ່ມເຕີມຈາກວິສາຫະກິດ (ແບບທາງໄກ) ເພື່ອຄວາມຊັດເຈນ.
- ການຄັດເລືອກວິສາຫະກິດໃນເບື້ອງຕົ້ນ ແລະ ວາງແຜນລົງກວດສອບຕົວຈິງ ຂັ້ນຕອນຕ່າງໆທີ່ຈຳເປັນ (Due diligence visits).

**ຂັ້ນຕອນ 5**

**ການລົງກວດກາຕົວຈິງຢູ່ສະຖານທີ່**

ການຊ່ວຍເຫຼືອໃນການຈັດເຮັດ:

- ແຜນການລົງທຶນ.
- ແຜນການຈັດຊື້-ຈັດຈ້າງ.

ການດຳເນີນຂັ້ນຕອນກວດສອບຕົວຈິງ ຂັ້ນຕອນຕ່າງໆທີ່ຈຳເປັນ:

- ສຳພາດເຈົ້າຂອງທຸລະກິດກະສິກຳ.
- ສຳພາດຂະແໜງການປູກຝັງ ແລະ ລ້ຽງສັດ ເມືອງ/ແຂວງ (DAE/PAE).
- ສຳພາດຊາວກະສິກອນ.
- ສຳພາດຜູ້ສະໜອງປັດໄຈການຜະລິດ ແລະ ຜູ້ຮັບຊື້.

**ຂັ້ນຕອນ 6**

**ທຸລະກິດກະສິກຳ ສົ່ງແຜນການລົງທຶນ ແລະ ແຜນການຈັດຊື້-ຈັດຈ້າງ ໃຫ້ກັບໜ່ວຍງານຄຸ້ມຄອງທຶນຊ່ວຍເຫຼືອສົມທົບ (MGFA)**

ມື້ສຸດທ້າຍ ໃນການສົ່ງແຜນການລົງທຶນ ແລະ ແຜນການຈັດຊື້-ຈັດຈ້າງ ແມ່ນໜ່ວຍງານປະສານງານຂອງກອງທຶນສົມທົບຈະເປັນຝ່າຍປະສານງານຫາບໍລິສັດທີ່ມີສິດໄດ້ຮັບທຶນເພື່ອສົ່ງເອກະສານມາ.

**ຂັ້ນຕອນ 7**

**ຄະນະບໍລິຫານງານ MGFA ກວດສອບຄືນແຜນການລົງທຶນ ແລະ ແຜນການຈັດຊື້-ຈັດຈ້າງ**

- MGFA ທົບທວນຄືນ, ອະນຸມັດ ແລະ ໃຫ້ຄະແນນແຜນການລົງທຶນ ແລະ ແຜນການຈັດຊື້-ຈັດຈ້າງ.
- MGFA ຈະສົ່ງແຈ້ງການກ່ຽວກັບຜົນການທົບທວນຄືນ ແລະ ການຕັດສິນໃຫ້ກັບຜູ້ສະໝັກທັງໝົດ (ທັງຜູ້ທີ່ໄດ້ຮັບອະນຸມັດ ແລະ ຜູ້ທີ່ຖືກປະຕິເສດ).

**ຂັ້ນຕອນ 8**

**ການລົງນາມໃນສັນຍາຮັບທຶນຊ່ວຍເຫຼືອສົມທົບ**

- EFF ຈະກະກຽມຮ່າງສັນຍາການຮັບທຶນຊ່ວຍເຫຼືອສົມທົບ ໂດຍຮ່ວມມືກັບຜູ້ສະໝັກທີ່ໄດ້ຮັບອະນຸມັດ.
- ສັນຍາສະບັບນີ້ ຈະຕ້ອງຜ່ານການອ່ານຢັ້ງຢືນ, ລົງນາມ ແລະ ປະທັບຕາໂດຍ EFF ແລະ ທຸລະກິດກະສິກຳ ຕໍ່ໜ້າພະຍານ, ພ້ອມທັງຕ້ອງຜ່ານການຢັ້ງຢືນຈາກຂະແໜງຍຸຕິທຳ (Notarized) ໃຫ້ຖືກຕ້ອງ.

**ຂັ້ນຕອນ 9**

**ການຈັດຊື້-ຈັດຈ້າງ, ການເບີກຈ່າຍທຶນ ແລະ ການຕິດຕາມປະເມີນຜົນ**

- ການຈັດຊື້, ການສົ່ງມອບ ແລະ ການຕິດຕັ້ງຊັບສິນເພື່ອການຜະລິດ.
- ການເບີກຈ່າຍເງິນແຕ່ລະງວດ ຈະເປັນໄປຕາມຕາຕະລາງທີ່ລະບຸໄວ້ໃນສັນຍາ ໂດຍອີງຕາມຫຼັກຖານການຈັດຊື້ຕົວຈິງ.

# ເງື່ອນໄຂ ແລະ ຂໍ້ກຳນົດຂອບເຂດຄວາມຮັບຜິດຊອບ

ການຍື່ນໃບສະໝັກ ແລະ ບົດສະເໜີ ບໍ່ໄດ້ໝາຍຄວາມວ່າຜູ້ສະໝັກຈະມີສິດທິທາງກົດໝາຍໃນການໄດ້ຮັບການສະໜັບສະໜູນຈາກໂຄງການ. ສິດໃນການກວດກາ, ປະເມີນໃບສະໝັກ ແລະ ບົດສະເໜີ, ລວມທັງການຕັດສິນອະນຸມັດການສະໜັບສະໜູນ ແມ່ນຂຶ້ນກັບການພິຈາລະນາຂອງຄະນະຄຸ້ມຄອງ MGFA ແຕ່ພຽງຜູ້ດຽວ. ຄະນະຄຸ້ມຄອງ MGFA ສະຫງວນສິດທີ່ຈະບໍ່ມອບທຶນທັງໝົດທີ່ມີ ໃນກໍລະນີທີ່ເຫັນວ່າ (ອີງຕາມການຕັດສິນ ແລະ ດຸນພິນິດຂອງຄະນະຄຸ້ມຄອງເອງ) ບໍ່ມີບົດສະເໜີໃດທີ່ສອດຄ່ອງກັບມາດຖານການຄັດເລືອກ ຫຼື ປະກອບສ່ວນເຂົ້າໃນຈຸດປະສົງຂອງໂຄງການຢ່າງພຽງພໍ.

ຖ້າຫາກການສະໜັບສະໜູນໄດ້ຮັບການອະນຸມັດຈາກຄະນະຄຸ້ມຄອງ MGFA, ກອງທຶນ EFF ຈະດຳເນີນການເຊັນສັນຍາທີ່ມີຜົນທາງກົດໝາຍ ກັບວິສາຫະກິດທີ່ໄດ້ຮັບການຄັດເລືອກ ພາຍໃຕ້ກົດໝາຍຂອງ ສປປ ລາວ ແລະ ເງື່ອນໄຂອື່ນໆທີ່ກ່ຽວຂ້ອງ. ໃນຂະນະດຽວກັນ, ກອງທຶນ EFF ແລະ ອົງການ GIZ ຈະເຊັນບົດບັນທຶກຄວາມເຂົ້າໃຈ (MOU) ກັບວິສາຫະກິດດັ່ງກ່າວ ກ່ຽວກັບການສະໜັບສະໜູນທາງດ້ານເຕັກນິກ ແລະ ເງື່ອນໄຂຕ່າງໆທີ່ກ່ຽວຂ້ອງ.
ຜູ້ສະໝັກຕ້ອງເຮັດໜັງສືຢັ້ງຢືນເປັນລາຍລັກອັກສອນວ່າ: ຈະຍິນດີໃຫ້ຂໍ້ມູນ ແລະ ຮ່ວມມືກັບທີມງານໂຄງການດ້ວຍຄວາມຈິງໃຈ. ພ້ອມທັງຕ້ອງໃຫ້ການສະໜັບສະໜູນຢ່າງເຕັມທີ່ ໃນການກວດສອບຄືນ ຄວາມຖືກຕ້ອງຂອງເອກະສານ ແລະ ຄຸນສົມບັດຕ່າງໆ ຜ່ານການສຳພາດກັບພາກສ່ວນພາຍນອກ ເຊັ່ນ: ຊາວກະສິກອນ, ຄູ່ຮ່ວມທຸລະກິດ ແລະ ພະນັກງານລັດ. ຂໍ້ມູນທີ່ໄດ້ແລກປ່ຽນນັ້ນ ຈະຖືກນຳໃຊ້ໂດຍເຈົ້າຂອງໂຄງການ ແລະ ຕົວແທນໂຄງການ ເພື່ອຈຸດປະສົງໃນການກຳນົດເງື່ອນໄຂຜູ້ມີສິດຮັບທຶນເທົ່ານັ້ນ.

ສຳລັບຜູ້ສະໝັກທີ່ຈະໄດ້ຮັບການລົງຢ້ຽມຢາມຕົວຈິງ ເພື່ອດຳເນີນຂັ້ນຕອນກວດສອບຂັ້ນຕອນຕ່າງໆທີ່ຈຳເປັນ ແລະ ຮັບການສະໜັບສະໜູນຈາກ MGFA ໃນການເຮັດແຜນການລົງທຶນ ແລະ ການຈັດຊື້, ຈະຕ້ອງໃຫ້ຄຳໝັ້ນສັນຍາເປັນລາຍລັກອັກສອນ ໃນການເສຍສະຫຼະເວລາ ແລະ ເອົາໃຈໃສ່ພະຍາຍາມ ເພື່ອກະກຽມແຜນການດັ່ງກ່າວຮ່ວມກັບຕົວແທນ MGFA ແລະ ປະຕິບັດຕາມຄຳແນະນຳຕ່າງໆ ຫາກມີຄວາມຈຳເປັນ.
ໃນນາມຕາງໜ້າໃຫ້ໂຄງການ SU-I-GFLM, ໜ່ວຍງານຄຸ້ມຄອງໂຄງການຂັ້ນສູນກາງ (NPMU) ຈະອອກເອກະສານຮັບຮອງ ແລະ ການແນະນຳຕົວທີ່ເປັນທາງການ ໃຫ້ແກ່ຕົວແທນໂຄງການທີ່ຈະລົງໄປດຳເນີນຂັ້ນຕອນກວດສອບຄວາມພ້ອມ ແລະ ໃຫ້ການສະໜັບສະໜູນແກ່ຜູ້ສະໝັກ.
ຫາກໄດ້ຮັບການຄັດເລືອກ, ທຸລະກິດກະສິກຳ ຄວນມີຄວາມພ້ອມທີ່ຈະຈັດຕັ້ງປະຕິບັດແຜນການລົງທຶນ ແລະ ການຈັດຊື້ ແລະ ຕ້ອງມີສ່ວນຮ່ວມສົມທົບທຶນ 50% ຂອງມູນຄ່າການລົງທຶນທັງໝົດ.

ຫາກໄດ້ຮັບການຄັດເລືອກ, ທຸລະກິດກະສິກຳຕ້ອງໃຫ້ຄຳໝັ້ນສັນຍາເປັນລາຍລັກອັກສອນ ແລະ ໃຫ້ການສະໜັບສະໜູນຢ່າງຕັ້ງໜ້າ ໃນການນຳໃຊ້ ແລະ ເຜີຍແຜ່ "ກົນໄກການແກ້ໄຂຄຳຮ້ອງທຸກ" (Grievance Redress Mechanism - GRM) ຂອງໂຄງການ SU-I-GFLM, ໂດຍການເຊັນ ແລະ ຈໍ້າກາປະທັບຂອງບໍລິສັດກ່ຽວກັບພັນທະສັນຍາວ່າດ້ວຍການປະຕິບັດຕໍ່ສັງຄົມ ແລະ ສິ່ງແວດລ້ອມ ເຊິ່ງເນື້ອໃນຂອງມັນແມ່ນຢູ່ໃນເອກະສານຊ້ອນທ້າຍ 4.[8]

[8] https://su-i-gflm.org/document/I-GFLL%20Grievance%20Redress%20Mechanism%20-%20System%20Description%20v1.1%20_ENG.pdf.

# ຖະແຫຼງການກ່ຽວກັບຄວາມເປັນສ່ວນຕົວຂອງຂໍ້ມູນ

ຜູ້ຄວບຄຸມຂໍ້ມູນ ສຳລັບການປະມວນຜົນຂໍ້ມູນສ່ວນບຸກຄົນ ແລະ ຂໍ້ມູນທຸລະກິດ ພາຍໃຕ້ການເຊື້ອເຊີນຍື່ນ ບົດສະເໜີໂຄງການນີ້ ແມ່ນ [ກົມປ່າໄມ້ - ໜ່ວຍງານ ການຫຼຸດຜ່ອນການປ່ອຍອາຍພິດຈາກການທຳລາຍປ່າໄມ້ ແລະ ການເຮັດໃຫ້ປ່າໄມ້ຊຸດໂຊມ (REDD+), ກະຊວງກະສິກຳ ແລະ ສິ່ງແວດລ້ອມ] ແລະ [ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້] ແລະ [ຫ້ອງການໂຄງການ GIZ ປະຈຳ ສປປ ລາວ] (ລວມກັນເອີ້ນວ່າ “ຜູ້ຄວບຄຸມຂໍ້ມູນ).

ຂໍ້ມູນສ່ວນບຸກຄົນ ແລະ ຂໍ້ມູນທຸລະກິດ ທີ່ບັນຈຸຢູ່ໃນບົດສະເໜີໂຄງການ ແລະ ເອກະສານປະກອບຕ່າງໆ ຈະຖືກນຳໃຊ້ເຂົ້າໃນການປະມວນຜົນ ໂດຍມີຈຸດປະສົງສະເພາະ ການຮັບ, ການພິຈາລະນາ ແລະ ການປະເມີນຜົນບົດສະເໜີໂຄງການ, ການປະເມີນຄວາມເໝາະສົມ ແລະ ການກວດສອບຄວາມຖືກຕ້ອງຂອງຂໍ້ມູນ, ການອະນຸມັດ ແລະ ການຄຸ້ມຄອງທຶນສົມທົບ, ການຕິດຕາມການຈັດຕັ້ງປະຕິບັດ, ແລະ ການປະຕິບັດຕາມພັນທະການລາຍງານ ຫຼື ການກວດສອບບັນຊີກ່ຽວຂ້ອງສະເພາະໂຄງການເທົ່ານັ້ນ.

ຂໍ້ມູນໃນໃບສະໝັກ/ບົດສະເໜີໂຄງການ ແລະ ເອກະສານປະກອບຕ່າງໆ ແມ່ນຖືກຈຳກັດ ໂດຍໃຫ້ສະເພາະແຕ່ບຸກຄະລາກອນທີ່ໄດ້ຮັບອະນຸຍາດຈາກ [ກົມປ່າໄມ້ / ກອງເລຂາ ເຣດບວກ (REDD+)], [ທີມງານ GIZ ປະຈຳ ສປປ ລາວ], [ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ (ກປສ)] ແລະ [ທີມງານ GFA ປະຈຳ ສປປ ລາວ]ເຂົ້າເຖິງ ໂດຍອີງຕາມຄວາມຈຳເປັນຂອງ ໜ້າທີ່ວຽກງານເພື່ອຈຸດປະສົງທີ່ໄດ້ລະບຸໄວ້ຂ້າງເທິງນັ້ນ.

ຂໍ້ມູນສ່ວນບຸກຄົນ ແລະ ຂໍ້ມູນທຸລະກິດ ຈະຖືກເກັບຮັກສາໄວ້ຢ່າງປອດໄພ ແລະ ຈະຖືກເກັບໄວ້ໃນໄລຍະເວລາທີ່ຈຳເປັນເພື່ອຮັບໃຊ້ຕາມຈຸດປະສົງທີ່ກ່າວມາຂ້າງເທິງນັ້ນ ແລະ ຕາມລະບຽບກົດໝາຍກຳນົດ ຫຼື ຂໍ້ກຳນົດຂອງການກວດສອບບັນຊີ; ຫຼັງຈາກນັ້ນ, ຂໍ້ມູນດັ່ງກ່າວຈະຖືກທຳລາຍຖິ້ມຢ່າງຖາວອນ ດ້ວຍວິທີການທີ່ມີຄວາມປອດໄພ.

ຂໍ້ມູນສ່ວນບຸກຄົນ ແລະ ຂໍ້ມູນທຸລະກິດ ທີ່ນຳມາປະມວນຜົນນັ້ນ ແມ່ນລວມທັງຂໍ້ມູນທີ່ຜູ້ສະໝັກໄດ້ສະໜອງໃຫ້ໃນໄລຍະການລົງປະເມີນຄວາມຖືກຕ້ອງຕົວຈິງຢູ່ພາກສະໜາມ ແລະ ຂໍ້ມູນໃນການສະໜັບສະໜູນ ແຜນການລົງທຶນ ແລະ ແຜນຈັດຊື້-ຈັດຈ້າງ.

**1.ລາຍລະອຽດຕິດຕໍ່ຂອງ GIZ**

ທີ່ຢູ່ອີເມວຂອງໂຄງການ: mgfa.lao@giz.de

ທີ່ຢູ່ອີເມວ ພະນັກງານຜູ້ປົກປ້ອງຂໍ້ມູນຂອງ GIZ: datenschutzbeauftragte@giz.de

ທີ່ຢູ່ທາງໄປສະນີ ຂອງ ສຳນັກງານໃຫຍ່ GIZ: Deutsche Gesellschaft für Internationale Zusammenarbeit (GIZ) GmbH Friedrich-Ebert-Allee 32 + 36, 53113 Bonn, Germany ຫຼື Dag-Hammarskjöld-Weg 1 – 5, 65760 Eschborn, Germany

**2.ປະເພດຂອງຂໍ້ມູນສ່ວນບຸກຄົນ ແລະ ຈຸດປະສົງຂອງການປະມວນຜົນ**

ພວກເຮົາປະມວນຜົນຂໍ້ມູນປະກອບດ້ວຍ ຊື່, ອີເມວ, ຂໍ້ມູນບໍລິສັດ ແລະ ຄຳຕອບຕ່າງໆ ທີ່ໄດ້ລະບຸໄວ້ໃນແບບຟອມໃບສະໝັກ/ບົດສະເໜີໂຄງການຂອງທ່ານ. ພວກເຮົາໄດ້ຮັບຂໍ້ມູນເຫຼົ່ານີ້ຈາກບັນດາເອກະສານທີ່ບໍລິສັດຂອງທ່ານໄດ້ຍື່ນພາຍໃຕ້ ‘ການເຊື້ອເຊີນໃຫ້ຍື່ນບົດສະເໜີໂຄງການ’ ທີ່ອອກໂດຍ ກົມປ່າໄມ້, ກະຊວງກະສິກຳ ແລະ ສິ່ງແວດລ້ອມ ແຫ່ງ ສປປ ລາວ. ຈຸດປະສົງຂອງການປະມວນຜົນຂໍ້ມູນ ແມ່ນເພື່ອພິຈາລະນາຂໍ້ສະເໜີທີ່ໄດ້ຍື່ນມາ ແລະ ກວດເງື່ອນໄຂຂອງບໍລິສັດທີ່ສົນໃຈ ແລ້ວດຳເນີນການເພື່ອໃຫ້ໄດ້ຮັບທຶນສົມທົບ.

**3.ຜູ້ຮັບຂໍ້ມູນສ່ວນບຸກຄົນຂອງທ່ານ**

ເພື່ອບັນລຸຕາມຈຸດປະສົງທີ່ໄດ້ລະບຸໄວ້ຂ້າງເທິງນັ້ນ, ພວກເຮົາອາດຈະແບ່ງປັນຂໍ້ມູນສ່ວນບຸກຄົນຂອງທ່ານໃຫ້ກັບ ບໍລິສັດ GFA Consulting Group ຜູ້ໃຫ້ບໍລິການເປັນທີ່ປຶກສາ, ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ (ກປສ) ລວມທັງໜ່ວຍງານການຫຼຸດຜ່ອນການປ່ອຍອາຍພິດຈາກການທຳລາຍປ່າໄມ້ ແລະ ການເຮັດໃຫ້ປ່າໄມ້ຊຸດໂຊມ (REDD+) ທີ່ຂຶ້ນກັບ ກົມປ່າໄມ້. ຂໍ້ມູນຂອງທ່ານຈະຖືກແບ່ງປັນປະມວນຜົນໄປຍັງປະເທດເຢຍລະມັນ ແລະ ໃນ ສປປ ລາວ.

# ຖະແຫຼງການກ່ຽວກັບຄວາມເປັນສ່ວນຕົວຂອງຂໍ້ມູນ

**4.ການເກັບຮັກສາຂໍ້ມູນສ່ວນບຸກຄົນຂອງທ່ານ**
ຂໍ້ມູນສ່ວນບຸກຄົນຂອງທ່ານ ຈະຖືກເກັບຮັກສາໄວ້ໃນໄລຍະເວລາເພື່ອໃຊ້ເມື່ອມີຄວາມຈຳເປັນ ແລະ ຈະນຳໃຊ້ຕາມຈຸດປະສົງຂອງການເກັບກຳຂໍ້ມູນ (ເບິ່ງຂໍ້ທີ 2) ຫຼື ເພື່ອປະຕິບັດຕາມພັນທະທາງດ້ານກົດໝາຍເທົ່ານັ້ນ.

**5.ສິດທິຂອງທ່ານ**
ທ່ານມີສິດໃນການຮ້ອງຂໍຂໍ້ມູນກ່ຽວກັບການປະມວນຜົນຂໍ້ມູນສ່ວນບຸກຄົນຂອງທ່ານ ແລະ ມີສິດໃນການຂໍແກ້ໄຂຂໍ້ມູນສ່ວນບຸກຄົນທີ່ບໍ່ຖືກຕ້ອງໃຫ້ມີຄວາມຊັດເຈນ. ພາຍໃຕ້ເງື່ອນໄຂທີ່ກຳນົດໄວ້, ທ່ານຍັງມີສິດຮ້ອງຂໍໃຫ້ລຶບຂໍ້ມູນສ່ວນບຸກຄົນຂອງທ່ານ, ຮ້ອງຂໍໃຫ້ມີການຈຳກັດການປະມວນຜົນ, ຄັດຄ້ານການປະມວນຜົນ, ຖອນຄືນກຄວາມຍິນຍອມໃນການປະມວນຜົນຂໍ້ມູນທີ່ທ່ານໄດ້ໃຫ້ໄວ້ກ່ອນໜ້ານັ້ນ, ຫຼື ໂອນຍ້າຍຂໍ້ມູນສ່ວນບຸກຄົນຂອງທ່ານໄປຍັງຜູ້ຄວບຄຸມຂໍ້ມູນຄົນອື່ນ. ທ່ານສາມາດເບິ່ງຂໍ້ມູນເພີ່ມເຕີມກ່ຽວກັບສິດທິຂອງທ່ານໄດ້ທີ່ https://www.giz.de/en/html/data_protection.html.

ຖ້າຫາກທ່ານມີຄວາມຕ້ອງການຈະນຳໃຊ້ສິດທິເຫຼົ່ານີ້ ຫຼື ມີຂໍ້ສົງໄສ ແລະ ຂໍ້ກັງວົນໃດໆ ກ່ຽວກັບການປະມວນຜົນຂໍ້ມູນສ່ວນບຸກຄົນຂອງທ່ານ, ກະລຸນາຕິດຕໍ່ຫາ: datenschutzbeauftragte@giz.de.

ຫາກທ່ານເຫັນວ່າສິດທິໃນການປົກປ້ອງຂໍ້ມູນຂອງທ່ານຖືກລະເມີດ, ທ່ານສາມາດຍື່ນຄຳຮ້ອງທຸກຕໍ່ອົງການທີ່ມີອຳນາດໃນການປົກປ້ອງຂໍ້ມູນ (Federal Commissioner for Data Protection and Freedom of Information - BfDI)

**6.ພື້ນຖານທາງດ້ານກົດໝາຍ ສຳລັບການປະມວນຜົນຂໍ້ມູນ**
ການປະມວນຜົນ ຂໍ້ມູນສ່ວນບຸກຄົນຂອງທ່ານ ແມ່ນມີຄວາມຈຳເປັນເພື່ອປະຕິບັດໜ້າທີ່ວຽກງານທີ່ຮັບໃຊ້ຜົນປະໂຫຍດລວມຂອງສັງຄົມ, ເນື່ອງຈາກໂຄງການນີ້ຖືກອອກແບບມາເພື່ອສະໜັບສະໜູນບັນດາຫົວໜ່ວຍທຸລະກິດກະສິກຳ ໃນ ສປປ ລາວ ທີ່ມີສ່ວນຮ່ວມໃນການພັດທະນາຂະແໜງການກະສິກຳໃນພາບລວມ, ພ້ອມທັງເປັນການຫຼຸດຜ່ອນອັດຕາການບຸກລຸກທຳລາຍປ່າໄມ້ ແລະ ປົກປັກຮັກສາຊັບພະຍາກອນທຳມະຊາດ. ຂໍ້ມູນຂອງທ່ານຈະຖືກຄຸ້ມຄອງໃຫ້ສອດຄ່ອງກັບລະບຽບການປົກປ້ອງຂໍ້ມູນທົ່ວໄປ (GDPR) ແລະ ກົດໝາຍພາຍໃນປະເທດທີ່ກ່ຽວຂ້ອງ.

ໂດຍການຍື່ນບົດສະເໜີໂຄງການ ແລະ ເອກະສານຕ່າງໆທີ່ກ່ຽວຂ້ອງ ເພື່ອການພິຈາລະນາທຶນຊ່ວຍເຫຼືອແບບສົມທົບ, ທ່ານໄດ້ໃຫ້ຄວາມຍິນຍອມໃນການປະມວນຜົນຂໍ້ມູນສ່ວນບຸກຄົນ ແລະ ຂໍ້ມູນທຸລະກິດ ຕາມທີ່ໄດ້ລະບຸໄວ້ໃນ ເອກະສານຖະແຫຼງການຄວາມເປັນສ່ວນຕົວຂອງຂໍ້ມູນສະບັບນີ້.

# ເອກະສານຊ້ອນທ້າຍ 1

## ແຂວງ ແລະ ເມືອງ ພາຍໃຕ້ ໂຄງການ SU-I-GFLM

| BOK | ແຂວງບໍ່ແກ້ວ |
|---|---|
| 1 | ເມືອງ ຫ້ວຍຊາຍ |
| 2 | ເມືອງ ເມິງ |
| 3 | ເມືອງ ຜາອຸດົມ |
| 4 | ເມືອງ ປາກທ່າ |

| LNT | ແຂວງຫຼວງນ້ຳທາ |
|---|---|
| 1 | ເມືອງ ນ້ຳທາ |
| 2 | ເມືອງ ລອງ |
| 3 | ເມືອງ ວຽງພູຄາ |
| 4 | ເມືອງ ນາແລ |

| OUD | ແຂວງອຸດົມໄຊ |
|---|---|
| 1 | ເມືອງ ໄຊ |
| 2 | ເມືອງ ນາໝໍ້ |
| 3 | ເມືອງ ງາ |
| 4 | ເມືອງ ແບ່ງ |

| SAY | ແຂວງໄຊຍະບູລີ |
|---|---|
| 1 | ເມືອງ ໄຊຍະບູລີ |
| 2 | ເມືອງ ຫົງສາ |
| 3 | ເມືອງ ປາກລາຍ |
| 4 | ເມືອງ ທົ່ງມີໄຊ |

| LPB | ແຂວງຫຼວງພະບາງ |
|---|---|
| 1 | ເມືອງ ນານ |
| 2 | ເມືອງ ໂພນທອງ |
| 3 | ເມືອງ ຊຽງເງິນ |
| 5 | ເມືອງ ວຽງຄຳ |

| HPN | ແຂວງຫົວພັນ |
|---|---|
| 1 | ເມືອງ ຊຳໃຕ້ |
| 2 | ເມືອງ ຮຽມ |
| 3 | ເມືອງ ສົບເບົາ |
| 4 | ເມືອງ ຊອນ |
| 5 | ເມືອງ ວຽງໄຊ |
| 6 | ເມືອງ ຫົວເມືອງ |
| 7 | ເມືອງ ຊຳເໜືອ |

# ເອກະສານຊ້ອນທ້າຍ 2

## ຕ່ອງໂສ້ມູນຄ່າກະສິກຳ ທີ່ໄດ້ຮັບການສະໜັບສະໜູນ ໃນແຂວງ ຫຼວງນ້ຳທາ, ບໍ່ແກ້ວ ແລະ ອຸດົມໄຊ

ທຸກໆການລົງທຶນໃນຕ່ອງໂສ້ມູນຄ່າ ຕ້ອງຮັບປະກັນຄວາມຍືນຍົງ ແລະ ປາສະຈາກການທຳລາຍປ່າໄມ້, ບໍ່ປະກອບສ່ວນເຂົ້າໃນການປ່ຽນແປງຮູບແບບການນຳໃຊ້ທີ່ດິນ, ເພີ່ມການປ່ອຍທາດອາຍເຮືອນແກ້ວ, ການສູນເສຍຄວາມຫຼາກຫຼາຍທາງຊີວະນາໆພັນ ຫຼື ຜົນກະທົບທາງລົບອື່ນໆ ທີ່ກ່ຽວຂ້ອງກັບສິ່ງແວດລ້ອມ ຫຼື ສັງຄົມ. ຕາຕະລາງລຸ່ມນີ້ ໄດ້ສະຫຼຸບລາຍຊື່ຜະລິດຕະພັນທີ່ມີສິດຮັບທຶນ ສຳລັບແຂວງ ຫຼວງນ້ຳທາ, ບໍ່ແກ້ວ ແລະ ອຸດົມໄຊ.

| | | | | | | | |
|---|---|---|---|---|---|---|---|
| 1 | ກາເຟ | 3 | ເຂົ້າ | 5 | ຊາ | 7 | ໜອງປາ |
| 2 | ໝາກແໜ່ງ | 4 | (ເຮືອນ) ສວນພັກ | 6 | ຕົ້ນໄມ້ໃຫ້ໝາກ | 8 | ໄມ້ຟອຍ |
| 9 | ຢາງພາລາ | 10 | ທົ່ງຫຍ້າລ້ຽງສັດ (ການຜະລິດພືດອາຫານສັດ) | 11 | ໄມ້ໄຜ່ | 12 | ການລ້ຽງມອນ-ສາວໄໝ |

# ເອກະສານຊ້ອນທ້າຍ 3

## ຕ່ອງໂສ້ມູນຄ່າກະສິກຳ ທີ່ໄດ້ຮັບການສະໜັບສະໜູນ ໃນແຂວງ ຫຼວງພະບາງ, ຫົວພັນ ແລະ ໄຊຍະບູລີ

ທຸກໆການລົງທຶນໃນຕ່ອງໂສ້ມູນຄ່າ ຕ້ອງຮັບປະກັນຄວາມຍືນຍົງ ແລະ ປາສະຈາກການທຳລາຍປ່າໄມ້, ບໍ່ປະກອບສ່ວນເຂົ້າໃນການປ່ຽນແປງຮູບແບບການນຳໃຊ້ທີ່ດິນ, ເພີ່ມການປ່ອຍທາດອາຍເຮືອນແກ້ວ, ການສູນເສຍຄວາມຫຼາກຫຼາຍທາງຊີວະນາໆພັນ ຫຼື ຜົນກະທົບທາງລົບອື່ນໆ ທີ່ກ່ຽວຂ້ອງກັບສິ່ງແວດລ້ອມ ຫຼື ສັງຄົມ. ຕາຕະລາງລຸ່ມນີ້ ໄດ້ສະຫຼຸບລາຍຊື່ຜະລິດຕະພັນທີ່ມີສິດຮັບທຶນ ສຳລັບແຂວງ ຫຼວງພະບາງ, ໄຊຍະບູລີ ແລະ ຫົວພັນ.

| | | | | | | | |
|---|---|---|---|---|---|---|---|
| 1 | ກາເຟ | 3 | ເຂົ້າ | 5 | ຊາ | 7 | ໜອງປາ |
| 2 | ໝາກແໜ່ງ | 4 | (ເຮືອນ) ສວນພັກ | 6 | ຕົ້ນໄມ້ໃຫ້ໝາກ | 8 | ຫຍ້າຂັດຟອຍ |
| 9 | ຢາງພາລາ | 10 | ທົ່ງຫຍ້າລ້ຽງສັດ (ການຜະລິດອາຫານສັດ) | 11 | ໄມ້ໄຜ່ | 12 | ການລ້ຽງມອນ-ສາວໄໝ |
| 13 | ໝາກເດືອຍ | 14 | ຕົ້ນຢານ | 15 | ນ້ຳມັນກວາງໄມ້ | 16 | ຫວາຍ |
| 17 | ການລ້ຽງເຜິ້ງ | 18 | ໝາກແຄ່ນ | 19 | ໝາກຖົ່ວດາວ | 20 | ຝ້າຍ |
| 21 | ເປືອກເໝືອກ | 22 | ຂ່າປ່າ | 22 | ໝາກງາ | 23 | ໝາກມັດ |

# ເອກະສານຊ້ອນທ້າຍ 4

## ຄວາມມຸ່ງໝັ້ນ ຕໍ່ການປະຕິບັດດ້ານສັງຄົມ ແລະ ສິ່ງແວດລ້ອມ

ບໍລິສັດ. ______________________, ໃນນາມຜູ້ສະໝັກຂໍທຶນສົມທົບຂອງໂຄງການ SU-I-GFML ຢືນຢັນວ່າຈະປະຕິບັດຕາມຫຼັກການຄຸ້ມຄອງທາງສັງຄົມ ແລະ ສິ່ງແວດລ້ອມ ທັງໝົດທີ່ໄດ້ລະບຸໄວ້ໃນປຶ້ມຄູ່ມືສຳລັບທຶນສົມທົບນີ້ ແລະ ເຄື່ອງມືເພື່ອກວດກາການປົກປ້ອງ, ໂດຍສະເພາະແມ່ນ:

- ການເຜີຍແຜ່ຂໍ້ມູນ (ທີ່ໂຄງການສະໜອງໃຫ້) ກ່ຽວກັບກົນໄກການແກ້ໄຂຄຳຮ້ອງທຸກຂອງ ໂຄງການ SU-I-GFML ໃຫ້ແກ່ຜູ້ຜະລິດ/ຊາວກະສິກອນທີ່ກ່ຽວຂ້ອງກັບກິດຈະກຳ/ທຸລະກິດຂອງບໍລິສັດ.
- ໂດຍທົ່ວໄປແລ້ວ, ຈະສົ່ງເສີມພຽງແຕ່ການເຮັດກະສິກຳແບບຍືນຍົງ ແລະ ບໍ່ສະໜັບສະໜູນການໃສ່ສານເຄມີ ແລະ/ຫຼື ການເຮັດທະສິກຳແບບທີ່ບໍ່ຍືນຍົງ.
  - oໂດຍສະເພາະແມ່ນ ຊ່ວຍໃຫ້ເຂົ້າໃຈ ແລະ ຮັບຮູ້ຕໍ່ "ບັນຊີລາຍຊື່ຂອງສານເຄມີກະສິກຳທີ່ຫ້າມໃຊ້ໃນ ສ.ປ.ປ. ລາວ, ເດືອນມິຖຸນາ 2010" ທີ່ລະບຸໄວ້ໃນເອກະສານເຄື່ອງມືກວດກາການຄຸ້ມຄອງ; ໂດຍຜ່ານການເຜີຍແຜ່ໃຫ້ແກ່ຜູ້ຜະລິດ/ຊາວກະສິກອນທີ່ກ່ຽວຂ້ອງກັບກິດຈະກຳ/ທຸລະກິດຂອງບໍລິສັດ.

ວັນທີ ______________________

ຊື່: ______________________

ຕໍ່ແໜ່ງ: ______________________

ລາຍເຊັນ: ______________________

ປະທັບກາຈ້ຳຂອບໍລິສັດ: ______________________